# ບົດສະເໜີ

## ຫ້ອງການປະຊາທິປະໄຕ, ສິດທິມະນຸດ ແລະ ແຮງງານ

## ບົດລາຍງານວ່າດ້ວຍເສລີພາບທາງສາດສະໜານາໆຊາດ ປະຈຳປີ 2009

ວັນທີ 26 ຕຸລາ ປີ 2009

### ເປັນຫຍັງຈຶ່ງຕ້ອງກະກຽມບົດລາຍງານ.

ກະຊວງການຕ່າງປະເທດໄດ້ຂຽນແລະ ຍື່ນບົດລາຍງານສະບັບນີ້ໃຫ້ສະພາຄອນແກຣັສກໍ່ເພື່ອໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍເສລີພາບທາງສາດສະໜານາໆຊາດ (IRFA) ສະບັບ 1998 ພາກ 102(b). ກົດໝາຍດັ່ງກ່າວໄດ້ກຳນົດໄວ້ວ່າ ລັດຖະມົນຕີຕ່າງປະເທດ ໂດຍໄດ້ຮັບການຊ່ວຍເຫຼືອຈາກ ເອກອັກຄະລັດຖະທູດອິດສະຫຼະ ເພື່ອເສລີພາບທາງສາດສະໜານາໆຊາດຈະໄດ້ສົ່ງມອບ "ບົດລາຍງານ ວ່າດ້ວຍເສລີພາບ ທາງສາດສະໜານາໆຊາດປະຈຳປີນີ້ແມ່ນອົງປະກອບ ຂອງບົດລາຍງານວ່າດ້ວຍສິດທິມະນຸດສະບັບຫຼ້າສຸດໂດຍສະໜອງຂໍ້ມູນທີ່ລະອຽດເພີ່ມເຕີມເຖິງປະເດັນທີ່ກ່ຽວພັນເຖິງເສລີພາບທາງສາດສະໜາໃນສາກົນ" ໃຫ້ສະພາ.

### ວິທີການກະກຽມຂຽນບົດລາຍງານ

ບັນດາສະຖານທູດສະຫະລັດອາເມຣິກາ ກະກຽມໃນການຮ່າງລາຍງານເຫລົ່ານີ້ຂັ້ນຕົ້ນ ໂດຍໄດ້ເກັບກຳຂໍ້ມູນຈາກຫລາກຫລາຍແຫຼ່ງ, ລວມທັງຈາກເຈົ້າໜ້າທີ່ ພະນັກງານຂອງລັດຖະບານ ແລະ ພະນັກງານທີ່ເຮັດວຽກທາງດ້ານສາດສະໜາ, ອົງການຈັດຕັ້ງບໍ່ສັງກັດລັດ,ນັກຂ່າວ, ຜູ້ຕິດຕາມເລື່ອງສິດທິມະນຸດ ແລະ ບັນດານັກຮຽນຮູ້ປັນຍາຊົນຕ່າງໆ. ວຽກງານເກັບກຳຂໍ້ມູນຂ່າວສານນີ້ ອາດເປັນໜ້າວຽກທີ່ມີໄພອັນຕະລາຍ ແລະປົກກະຕິແລ້ວເຈົ້າຫນ້າທີ່ກະຊວງການຕ່າງປະເທດສະຫະລັດແມ່ນເຮັດວຽກພາຍໃຕ້ສະພາບຫຍຸ້ງຍາກ ແລະ ບາງຄັ້ງກໍອັນຕະລາຍໃນການສືບຫາຂ່າວການລາຍງານກ່ຽວກັບການລະເມີດສິດທິມະນຸດ, ເພື່ອຕິດຕາມການເລືອກຕັ້ງ ແລະ ເພື່ອໃຫ້ການຊ່ວຍເຫລືອຜູ້ທີ່ຕົກຢູ່ໃນໄພອັນຕະລາຍຍ້ອນສາເຫດຈາກຄວາມເຊື່ອຖືໃນທາງສາດສະໜາຂອງເຂົາເຈົ້າ.

ຫ້ອງການສາກົນເພື່ອເສລີພາບທາງສາດສະໜາໂດຍການຮ່ວມມືໃນການເກັບກຳ ແລະ ວິໃຈຂໍ້ມູນສຳລັບຂຽນບົດລາຍງານຂອງບັນດາປະເທດນັ້ນ, ໄດ້ຮັບການສະໜັບສະໜູນດ້ານວິຊາການ, ຄວາມຊຳນິຊຳນານຈາກບັນດາຫ້ອງການຂອງກະຊວງຕ່າງປະເທດ, ບັນດາອົງການສາດສະໜາ, ອົງການຈັດຕັ້ງບໍ່ສັງກັດລັດ

ອື່ນໆ, ເຈົ້າໜ້າທີ່ຂອງລັດຖະບານຕ່າງປະເທດ, ຕາງໜ້າບັນດາອົງການຈັດຕັ້ງທີ່ຂຶ້ນກັບສະຫະປະຊາຊາດ ແລະ ບັນດາສະຖາບັນສາກົນ ແລະ ພາກພື້ນຕ່າງໆ ແລະ ຜູ້ຊ່ຽວຊານຈາກສະຖາບັນການສຶກສາ ແລະ ຊຸ່ມວນຊົນຕາງໆ. ໃນວຽກງານການລວບລວມ ແລະ ບັນນາທິການບົດລາຍງານຈາກປະເທດຕ່າງໆນັ້ນ, ຫ້ອງການສາກົນເພື່ອເສລີພາບທາງສາດສະໜາ ໄດ້ປຶກສາຫາລືກັບບັນດາຜູ້ຊໍານານງານກ່ຽວກັບບັນຫາການແບ່ງແຍກ ແລະ ກໍ່ກວນຍ້ອນການເຊື່ອຖືສາດສະຫນາ ແລະ ໄດ້ປຶກສາກັບຜູ້ນໍາສາດສະໜາສ່ວນຫຼາຍກໍຄືຊ່ຽວຊານດ້ານກົດໝາຍ. ຫຼັກການຊີ້ນໍາຂອງຫ້ອງການໃນການປະຕິບັດງານນີ້ແມ່ນຮັບປະກັນວ່າຂໍ້ມູນທີ່ກ່ຽວຂ້ອງ ທັງຫມົດທີ່ເກັບກໍາມານັ້ນແມ່ນໄດ້ຖືກປະເມີນແບບຕົງໄປຕົງມາ, ຄົບຖ້ວນແລະ ຍຸດຕິທໍາເທົ່າທີ່ເປັນໄປໄດ້.

ບັນດາຖັນແຖວກະຊວງ, ສໍານັກງານ ແລະ ຫ້ອງການຕ່າງໆຂອງສະຫະລັດ ຈະນໍາໃຊ້ບົດລາຍງານນີ້ ເພື່ອສ້າງນະໂຍບາຍ, ດໍາເນີນວຽກງານດ້ານການທູດ, ໃຫ້ການຊ່ວຍເຫຼືອ, ຝຶກອົບຮົມ ກໍ່ຄືເພື່ອກໍານົດການອະນຸມັດ ຊັບພະຍາກອນຕ່າງໆ. ພ້ອມນັ້ນມັນກໍຈະຖືກໝູນໃຊ້ເປັນພື້ນຖານໃຫ້ແກ່ການກໍານົດວ່າມີປະເທດໃດທີ່ທໍາການລະເມີດ ຫຼື ອະນຸຍາດໃຫ້ມີການລະເມີດເສລີພາບສາດສະຫນາ “ຢ່າງຮຸນແຮງ” ກໍ່ຈະຖືກຮັບຮູ້ວ່າ ເປັນປະເທດທີ່ຖືກວິຕົກກັງວົນເປັນພິເສດ.

**ການນໍາໃຊ້ຄໍາສັບ**

ເມື່ອບົດລາຍງານສະບັບນີ້ລະບຸວ່າ ລັດຖະບານໃດໜຶ່ງ “ໂດຍທົ່ວໄປແລ້ວໄດ້ນັບຖື ” ສິດທິໃນການເຊື່ອຖືທາງສາດສະໜາໃນໄລຍະເວລາຂອງການລາຍງານນັ້ນ  ກໍ່ໝາຍຄວາມວ່າປະເທດດັ່ງກ່າວໄດ້ພະຍາຍາມຫຼາຍທີ່ສຸດເພື່ອປົກປ້ອງເສລີພາບທາງສາດສະໜາດັ່ງນັ້ນ“ໂດຍທົ່ວໄປໄດ້ນັບຖື” ແມ່ນຈັດຢູ່ໃນອັນດັບທີ່ສູງສຸດກ່ຽວກັບການນັບຖືອິດສະລະພາບທາງສາດສະໜາ. ໄດ້ໃຊ້ຄໍາສັບ“ໂດຍທົ່ວໄປແລ້ວໄດ້ ນັບຖື” ໃນລາຍງານນີ້ກໍຍ້ອນເຫັນວ່າຄວາມພະຍາຍາມປົກປ້ອງ ແລະ ສົ່ງເສີມໃຫ້ເກີດເສລີພາບທາງ ສາດສະໜານັ້ນບໍ່ແມ່ນສິ່ງຕາຍຕົວຢູ່ຄືເກົ່າຕະຫຼອດໄປ; ດັ່ງນັ້ນຈຶ່ງເປັນໄປບໍ່ໄດ້ ທີ່ຈະຂຽນຢ່າງແນ່ນອນວ່າລັດຖະບານໄດ້ນັບຖືສິດທິນີ້ຢ່າງເຕັມປ່ຽມ ໃນໄລຍະຂຽນລາຍງານເຖິງແມ່ນວ່າເງື່ອນໄຂໄດ້ເອື້ອ ອໍານວຍໃຫ້ຢ່າງເຕັມທີ່ກໍ່ຕາມ.

**ຄຳຂອບໃຈ**

ບົດລາຍງານ ປີ 2009 ນີ້ ກວມເອົາໄລຍະເວລາລະຫວ່າງວັນທີ 1 ກໍລະກົດ 2008 ຫາ 30 ມິຖຸນາ 2009, ແລະ ສະທ້ອນໃຫ້ເຫັນເຖິງຫນຶ່ງປີແຫ່ງຄວາມພະຍາຍາມທຸ້ມເທໂດຍເຈົ້າໜ້າທີ່ການທູດ ແລະ ພະນັກ ງານທົ່ວໄປທີ່ກະຊວງຕ່າງປະເທດ ແລະ ບັນດານັກການທູດປະຈຳຢູ່ ຕ່າງປະເທດຫຼາຍຮ້ອຍຄົນ.
ພວກເຮົາຂໍຂອບໃຈບັນດາເຈົ້າໜ້າທີ່ ສະຖານທູດ ແລະ ສະຖານກົງສູນຢູ່ຕ່າງປະເທດຫຼາຍຄົນທີ່ໄດ້ຕິດຕາມ ແລະ ສົ່ງເສີມໃຫ້ມີເສລີພາບທາງສາດສະໜາ, ພ້ອມທັງໄດ້ບັນທຶກຢ່າງລະອຽດ ສະພາບກ່ຽວກັບເສລີພາບດ້ານສາດສະໜາ. ນອກຈາກນີ້ຍັງເຫັນວ່າບຸກຄົນພາຍໃນຫ້ອງການສາກົນເພື່ອເສລີພາບດ້ານສາດສະໜາກໍ່ໄດ້ມີຄວາມພະຍາຍາມຢ່າງໜັກ ແລະ ພວກເຮົາກໍຮັບຮູ້ ແລະ ຊົມເຊີຍການເຮັດວຽກຢ່າງ ທຸ້ມເທແບບບໍ່ຮູ້ອິດເມື່ອຍເພື່ອເສລີພາບດ້ານສາດສະໜາ ແລະ ເຮັດໃຫ້ມີບົດລາຍງານນີ້ຂຶ້ນມາ, ໃນຈຳນວນບຸກຄົນດັ່ງກ່າວນັ້ນກໍມີ ຄຣາຣິສຊາ ອາດາມຊັນ, ອາລີ ອັກເກາບຣາຮິມ,ຊີເວຍ ອາຍັບ,ນາສຣີນ ບາດັດ,ຈັດຊັນ ເບີດຊໍ,ເອມ ເອ ບອດສທ໌, ອາເລັກຊານດຣາ ບຣີເວີ້, ມາກ ຄາຊັນ, ບາບາຣາ ເຄັດທ, ວໍແຣນຄອບຟສະກີ, ເຄີດນີ ຄຸກ,ກຣາຮາມ ຄຸດເຕີຣີເອີ, ເຄດ ເດລີ, ດຸດ ເດຍບອນ, ເຄີທ ດອນເນລີ, ບຣາຍອານຟາບບີ້, ອໍກຸດສຕິນ ຟາເຣ, ນາທານ ກອດເຊ, ເອ ທີ ກອມບີສ, ແນນຊີ ເຮເວັດ, ໂອລີເວຍ ຮີວຕັນ, ນາທານຣິດເຈັນ, ວິກເຕີ້ ຮີວເຊີ, ອາລີເຊຍ ຈັກວິກຊ, ອີມີລີ ກາໂອ, ຈັດສຕິນ ເຄີນ,ຊາຣາ ຄີມ, ປີເຕີ້ ໂກວັດ, ເຈນໂດລິນ ແມັກ, ຊາເຟຍ ໂມຮາມຸດ, ຟີເດວ ມາຣາເຈລ,ອາເລັກຊານເດີ້ ແມັກລາເຣນ, ໂຈອານເນລາ ໂມຣາເລສ, ຊາຣາ ເນລຊັນ, ເອຣອນ ປີນາ, ເດວິດ ໂຣເດເມລ, ລານາ ຊາລີ, ຕາຣີກ້າ ເຊັດທີ, ແອນເດຍຣຊີດາຣີ, ຣໍເຣນ ສມິດ ແລະ ອັບເດລນໍ ໄຊບັກ. ຜົນງານການປະກອບສ່ວນຂອງບຸກຄົນເຫລົ່ານີ້ໄດ້ຊ່ວຍໃຫ້ມີຄວາມຄືບໜ້າເພື່ອຄວາມຫມັ້ນໝາຍເສລີພາບ, ຮັບປະກັນຄວາມແນ່ນອນຊັດເຈນໃນລາຍງານຂອງພວກເຮົາ, ແລະໄດ້ນຳມາແຫ່ງຄວາມຫວັງໃຫ້ແກ່ ຜູ້ຖືກກົດຂີ່ ຢູ່ທົ່ວທຸກແຫ່ງໃນໂລກ.

ນຳເຜີຍແຜ່ໂດຍ ກະຊວງການຕ່າງປະເທດ, ສຳນັກງານ ປະຊາທິປະໄຕ, ສິດທິ ແລະ ແຮງງານ, ຫ້ອງການສາກົນເພື່ອເສລີພາບທາງສາດສະໜາ ໂດຍການຮ່ວມມືກັບ ຫ້ອງການ ວຽກງານດ້ານການສຶກສາ ແລະ ວັດທະນາທຳ.ເດືອນຕຸລາ ປີ 2009.

# ບົດນຳ

## ຫ້ອງການປະຊາທິປະໄຕ, ສິດທິມະນຸດ ແລະ ແຮງງານ

## ບົດລາຍງານວ່າດ້ວຍເສລີພາບທາງສາດສະໜານາໆຊາດ ປະຈຳປີ 2009

ວັນທີ 26 ຕຸລາ ປີ 2009

“ສິດເສລີພາບໃນການນັບຖືສາດສະໜາ ແມ່ນປະເດັນໃຈກາງ ເພື່ອເອື້ອອຳນວຍ ໃຫ້ຄົນເຮົາ ສາມາດດຳລົງຊີວິດຢູ່ຮ່ວມກັນ.”

*ປະທານາທິບໍດີ ບາຣັກ ໂອບາມາ*

ໃນບົດປາໄສ ທີ່ມີຄວາມໝາຍສຳຄັນຢູ່ມະຫາວິທະຍາໄລ ໄຄໂຣ, ທ່ານປະທານາທິບໍດີ ໂອບາມາ ກ່າວເຖິງ ວິໄສທັດຂອງທ່ານຢ່າງຊັດເຈນ ກ່ຽວກັບ "ການເລີ່ມຕົ້ນຄັ້ງໃໝ່" ລະຫວ່າງສະຫະລັດອາເມຣິກາ ແລະ ຊາວມຸສລິມໃນທົ່ວໂລກ ສາຍສຳພັນ ທີ່ອີງໃສ່ຜົນປະໂຫຍດຮ່ວມກັນ ແລະ ຄວາມເຄົາລົບທີ່ມີຕໍ່ກັນ. ທ່ານຍັງກ່າວອີກວ່າການສ້າງຄວາມຜູກພັນທີ່ແຂງແກ່ນນັ້ນ "ຮຽກຮ້ອງຕ້ອງການໃຫ້ມີຄວາມພາກພຽນພະຍາຍາມແບບຍືນຍົງເພື່ອທີ່ຈະຮັບຟັງ ຄຳຄິດເຫັນຂອງແຕ່ລະຝ່າຍ, ເພື່ອທີ່ຈະຮຽນຮູ້ຈາກກັນແລະກັນ, ເຄົາລົບນັບຖືຊຶ່ງກັນແລະກັນ ລວມທັງການສະແຫວງ ຫາຈຸດຢືນທີ່ເປັນເອກະພາບກັນ." ຂໍ້ຜູກພັນທີ່ຮື້ຟື້ນຄືນໃໝ່ ດັ່ງກ່າວນີ້ ກົດດັນພວກເຮົາ ບໍ່ໃຫ້ໜີຄວາມຮັບຜິດຊອບຈາກປະເດັນທີ່ເປັນຂໍ້ໂຕ້ແຍ້ງ ແຕ່ຈະເປັນ “ການປະເຊີນກັບຄວາມເຄັ່ງຕຶງເຫລົ່ານັ້ນຢ່າງເຊິ່ງໜ້າ” ແລະ ປະຕິບັດພາລະກິດແບບເປັນຄູ່ຮ່ວມງານເພື່ອແກ້ໄຂບັນຫາທັງຫລາຍ.

ກະຊວງການຕ່າງປະເທດ ເຜີຍແຜ່ *ບົດລາຍງານສິດເສລີພາບທາງສາດສະໜາໃນທົ່ວໂລກ ປະຈຳປີ* ບົນເນື້ອໃນຈິດໃຈຂອງການເຈລະຈາ ແລະ ການຮ່ວມມື ດັ່ງກ່າວນີ້. ສາດສະໜາ ແມ່ນປະກົດການລະດັບໂລກ; ທຸກປະເທດ ປະເຊີນຫນ້າກັບສິ່ງທ້າທາຍ ແລະ ກາລະໂອກາດ ທີ່ສືບເນື່ອງຈາກຄວາມຫລາກຫລາຍທາງດ້ານສາດສະໜາ, ແລະ ບໍ່ມີປະເທດໃດເລີຍ ທີ່ມີປະຫວັດທີ່ສົມບູນແບບກ່ຽວກັບເສລີພາບໃນການນັບຖືສາດສະໜາ. ໃນຖານະທີ່ເປັນຊາວອາເມຣິກາ ພວກຂ້າພະເຈົ້າມີຄວາມພາກພູມໃຈໂດຍຊອບທຳຕໍ່ມໍລະດົກໃນເສລີພາບດ້ານສາດສະໜາຂອງ ພວກຂ້າພະເຈົ້າ; ຊາວອົບພະຍົບຈຳນວນຫລວງຫລາຍທີ່ຫລົບໜີ ການຖືກຂົ່ມເຫັງຍ້ອນການນັບຖືສາດສະໜາ ຢູ່ປະເທດບ້ານເກີດຂອງເຂົາເຈົ້າເອງ ແລະໄດ້ພົບພໍ້ບ່ອນຫລົ້ໄພຢູ່ຜືນແຜ່ນດິນພວກຂ້າພະເຈົ້າ. ແຕ່ວ່າພວກເຮົາຍັງສຳນຶກຢ່າງເຈັບປວດຂົມຂື່ນໃນການປະພຶດທີ່ບໍ່ຖືກຕ້ອງຂອງປະເທດຂ້າພະເຈົ້າໃນອະດີດ ຕໍ່ຊົນກຸ່ມນ້ອຍບາງກຸ່ມ. ນັບຈາກການສັງຫານໝູ່ຊຸມຊົນເຄເກີ (Quakers) ໃນຊ່ວງກາງສັດຕະວັດທີ່ 17 ຢູ່ອະນານິຄົມອ່າວແມດຊາຊູເຊັດໄປເຖິງການເນລະເທດ ຊາວມໍມອນ (Mormons) ຢູ່ລັດມິດຊູຣີ ໃນປີ 1838 -39 ລວມທັງການແບ່ງແຍກ

ເລືອກປະຕິບັດຕໍ່ ຊາວອາເມຣິກາມຸສລິມ ພາຍຫລັງເຫດການ 9/11, ສັງຄົມຂອງພວກຂ້າພະເຈົ້າໄດ້ຜ່ານການຕໍ່ສູ້ທີ່ຍືດ ເຍື້ອຍາວນານ ເພື່ອສ້າງຄວາມປອງດອງໃນຄວາມຫລາກຫລາຍທາງດ້ານສາດສະໜາ. ສະນັ້ນ ພວກຂ້າພະເຈົ້າໄດ້ ຮຽນຮູ້ຈາກປະສົບການເຊິ່ງພວກຂ້າພະເຈົ້າ ເພີ່ມຄຸນຄ່າໂດຍນໍາໃຊ້ທິດສະດີພະຫຸພົດນິຍົມ ເຊິ່ງຮັບຮອງ ໂດຍລັດ ຖະບານ ແລະ ອ້າແຂນຮັບເອົາໂດຍສັງຄົມ. ຜ່ານເນື້ອໃນ *ບົດລາຍງານປະຈໍາປີ* ແລະ ຄວາມພະຍາຍາມທາງການທູດອື່ນໆ, ພວກຂ້າພະເຈົ້າ ສະໜັບສະໜູນທຸກປະເທດ ເພື່ອປົກປ້ອງສິດທິທາງດ້ານສາດສະໜາ ແລະ ສົ່ງເສີມ ບຸກຄົນ ຫລື ກຸ່ມບຸກຄົນທັງມວນໃຫ້ໃສ່ໃຈ ເຄົາລົບຄວາມແຕກຕ່າງ ຂອງສິດທິທາງດ້ານສາດສະໜາ. ດັ່ງທີ່ ທ່ານປະທານາທິ ບໍດີ ໂອບາມາ ກ່າວຢູ່ນະຄອນຫລວງໄຄໂຣ ວ່າ: "ພົນລະເມືອງໃນແຕ່ລະປະເທດ ຄວນມີອິດສະຫລະທີ່ຈະເລືອກ ແລະ ດໍາລົງຊີວິດດ້ວຍສັດທາທີ່ອີງໃສ່ ຄວາມຈູງໃຈຂອງສະຕິສໍາປະສັນຍະ ແລະ ຈິດໃຈລວມທັງຈິດວິນຍານ. ການຍອມຮັບຄໍາຄິດເຫັນທີ່ແຕກຕ່າງດັ່ງກ່າວນີ້ ແມ່ນສິ່ງຈໍາເປັນ ສໍາລັບຄວາມຈະເລີນຮຸ່ງເຮືອງ ຂອງສາດສະໜາ, ແຕ່ມັນຍັງຖືກທ້າທາຍໃນຫລາຍລັກສະນະ." *ບົດລາຍງານປະຈໍາປີ* ສໍາຫລວດກ່ຽວກັບບັນດາ "ລັກສະນະທັງຫລາຍເຫລົ່ານັ້ນ" ຢູ່ໃນ 198 ດິນແດນ ແລະ ປະເທດ.ໂດຍກວມເອົາທັງການເຊື່ອມໂຊມ ແລະ ການປັບປຸງແກ້ໄຂໃຫ້ດີຂຶ້ນໃນສະຖານະພາບຂອງລະບົບການປົກຄອງ ກໍ່ຄືສັງຄົມຕໍ່ໜ້າການເຄົາລົບເສລີພາບໃນການນັບຖືສາດສະໜາ, *ບົດລາຍ ງານປະຈໍາປີ* ເລັງໃສ່ເປົ້າໝາຍເນື້ອໃນໃຫ້ມີລັກສະນະ ຮອບດ້ານ ແລະ ສົມດູນ, ເຊິ່ງຄໍານຶງເຖິງຄວາມຫລາກຫລາຍ ແລະ ພະລັງແຂງແກ່ນຂອງປະເພນີສືບ ທອດດ້ານສາດສະໜາໃນທົ່ວໂລກ ລວມທັງເງື່ອນໄຂການເມືອງສັງຄົມ. ເຖິງ ແມ່ນວ່າ ຊຸມຊົນ ນັບຖື ສາດສະໜາທັງ ຫລາຍ ໃນທົ່ວໂລກ ປະເຊີນກັບສະພາບການທີ່ແຕກຕ່າງກັນກໍ່ຕາມ, ບັນດາ ເຫດຜົນ ແລະ ຫລັກການ ກໍ່ຄືໃນທາງປະຕິບັດການຄຸ້ມຄອງເສລີພາບຂອງເຂົາເຈົ້າໃຫ້ປອດໄພ ກໍ່ຍັງມີຄວາມຫມາຍ ເໝືອນເດີມ: ສິດເສລີພາບໃນການນັບຖືສາດສະໜາ ແມ່ນສິດທິຂັ້ນພື້ນຖານຢ່າງໜຶ່ງ, ຄວາມດີງາມຂອງ ສັງຄົມ, ແຫລ່ງກໍາເນີດຂອງສະເຖຍລະພາບ, ແລະ ເປັນກຸນແຈຕໍ່ຄວາມໝັ້ນຄົງສາກົນ. ທ່ານປະທານາທິບໍດີ ໂອບາມາ ກ່າວ ເຖິງປະເດັນ ທີ່ພົວພັນກັບ ແຕ່ລະເຫດຜົນ ສີ່ປະການເຫລົ່ານັ້ນ ໃນຄໍາປາໄສຂອງທ່ານຫລາຍຄັ້ງ ໃນຕະຫລອດໄລຍະ ປີຜ່ານມາ.

ເຫດຜົນທີໜຶ່ງ, ເສລີພາບໃນການນັບຖືສາດສະໜາ ແມ່ນສິດທິໜຶ່ງທີ່ເກີດມາພ້ອມກັບມະນຸດທັງມວນ, ໂດຍບໍ່ກ່ຽວກັບຄວາມສັດທາຂອງເຂົາເຈົ້າວ່າຈະມີ ຫລືບໍ່ ກໍ່ຕາມ. ດັ່ງທີ່ຖືກຈາລຶກໄວ້ຢູ່ໃນຖະແຫລງການສາກົນ ວ່າດ້ວຍສິດ ທິມະນຸດ ແລະ ສົນທິສັນຍາສາກົນອື່ນໆ, ສິດເສລີພາບໃນການນັບຖືສາດສະໜາ, ປະຕິບັດ, ແລະ ເຜີຍແຜ່ຄວາມສັດ ທາຂອງຕົນຕໍ່ຄົນອື່ນ ຈະຕ້ອງໄດ້ຮັບການເຄົາລົບຈາກທຸກສັງຄົມ ແລະ ລັດຖະບານ. ສະຫະລັດອາເມຣິກາ ຍຶດໝັ້ນ ຕໍ່ພັນທະ ດັ່ງກ່າວຢ່າງໜັກແໜ້ນ. ໃນຄໍາປາໄສຕໍ່ຊາວມຸສລິມ ເນື່ອງໃນໂອກາດການຖືສິນອົດ (Ramadan), ທ່ານ ປະທານາທິບໍດີ ກ່າວວ່າ "ຍາມໃດ ອາເມຣິກາ ຈະຢືນຍັດຢູ່ສະເໝີ ເພື່ອຮັບປະກັນຕາມສິດທິມະນຸດ ໃຫ້ທຸກຄົນ ສາມາດສະແດງ

ອອກ ເຖິງຄວາມຄິດເຫັນ, ປະຕິບັດຕາມຄຳສັ່ງສອນຂອງສາດສະໜາ, ປະກອບສ່ວນ ເຂົ້າໃນສັງຄົມໄດ້ຢ່າງເຕັມທີ່, ແລະ ມີ ຄວາມໝັ້ນໃຈ ໃນລະບອບການປົກຄອງດ້ວຍກົດໝາຍ."

ເຫດຜົນທີສອງ, ເສລີພາບໃນການນັບຖືສາດສະໜາ ສ້າງຄວາມເຂັ້ມແຂງໃຫ້ຊຸມຊົນໃນດ້ານຄວາມສັດທາຍູ້ໜູນປະໂຫຍດສ່ວນລວມຂອງສັງຄົມ ໃຫ້ກ້າວໜ້າ. ໃນດ້ານກັບກັນ, ເສລີພາບມີທ່າອ່ຽງຈະບຸກເບີກທາງແກ່ຄວາມເຊື່ອໝັ້ນ ແລະ ຄວາມກະຕືລືລົ້ນໃຫ້ເປັນການກະທຳທີ່ອຳນວຍປະໂຫຍດ ແລະ ເຂົ້າຮ່ວມທີ່ສ້າງສັນໃນເວທີສາທາລະນະ. ຢູ່ສະຫະລັດອາເມຣິກາ, ກຸ່ມສາດສະໜາຈຳນວນຫລວງຫລາຍ, ນັບທັງນິກາຍ ທີ່ມີສະມາຊິກ ຫລວງຫລາຍ ຈົນເຖິງ ນິກາຍນ້ອຍຢູ່ຕາມທ້ອງຖິ່ນ, ນຳເອົາສັດທາຂອງເຂົາເຈົ້າມາຈັດຕັ້ງປະຕິບັດ ແລະ ຊ່ວຍສ້າງໃຫ້ ສັງ ຄົມ ມີຄວາມເປັນທຳ ແລະ ເຫັນອົກເຫັນໃຈຫລາຍກວ່າ. ເນື່ອງໃນໂອກາດ ທີ່ກ່າວເປີດ ຫ້ອງການ ວຽກງານພື້ນຖານຄວາມເຊື່ອຖື ແລະ ປະຕິບັດງານຮ່ວມກັບປະເທດອ້ອມຂ້າງ(White House Office of Faithbased and Neighborhood Partnerships) ທີ່ຂຶ້ນກັບທຳນຽບຂາວ ທ່ານປະທານາທິບໍດີ ໂອບາມາ ຢ້ຳວ່າ: "ມີອຳນາດໜຶ່ງ ທີ່ຍິ່ງໃຫຍ່ກວ່າລັດຖະບານ. ເຊິ່ງແມ່ນການສະແດງອອກຂອງສັດທາ, ສິ່ງດັ່ງກ່າວນີ້ ເປັນຄວາມປາຖະນາ ຢ່າງແຮງກ້າ ທີ່ຈະສົ່ງມອບໃຫ້ຄືນ, ສິ່ງດັ່ງກ່າວນີ້ເປັນຄວາມປະສົງທີ່ແຮງກ້າສຳລັບຄວາມມຸ້ງ ໝາຍ ໃຫຍ່ກວ່າຂອງຕົນເອງ, ເຊິ່ງເຜີຍຕົນອອກມາ ບໍ່ພຽງແຕ່ຢູ່ສະຖານທີ່ສັກກາລະບູຊາເທົ່ານັ້ນ ແຕ່ຍັງແມ່ນຢູ່ຕາມ ສະຖານ ທີ່ດູແລຄົນເຖົ້າແກ່ຊະລາ ແລະ ທີ່ພັກພິງ, ໂຮງຮຽນ ແລະ ໂຮງໝໍປິ່ນປົວ."

ເຫດຜົນທີສາມ, ເສລີພາບໃນການນັບຖືສາດສະໜາບໍ່ແມ່ນແຕ່ຈະເປັນສິດທິມະນຸດ ແລະ ຜົນປະໂຫຍດລວມ ຂອງສັງຄົມພຽງເທົ່ານັ້ນ, ມັນຍັງແມ່ນກົດເກນທີ່ຈຳເປັນ ສຳລັບສະເຖຍລະພາບຂອງຊາດ. ອຳນາດການປົກຄອງ ພະເດັດການທີ່ປາບປາມກຸ່ມນັບຖືສາດສະໜາ ແລະ ແນວຄິດໃຊ້ຂໍ້ອ້າງການຮັກສາດສະເຖຍລະພາບນັ້ນ ສ້າງເງື່ອນໄຂ ຢ່າງເຈາະຈົງນັ້ນ ລົ້ມລ້າງທຳລາຍ ເປົ້າໝາຍຂອງຕົນທີ່ໄດ້ຖະແຫລງໄວ້. ການປາບປາມກໍ່ໃຫ້ເກີດແນວຄິດຫົວຮຸນແຮງ. ການບີບບັງຄັບ ແລະ ແຊກແຊງຕາມລຳພັງໃຈໃນການປະຕິບັດສາດສະຫນາໂດຍສັນຕິ ສາມາດເຮັດໃຫ້ ຄວາມແຄ້ນໃຈແຂງກ້າຂຶ້ນຕື່ມ ເປັນການຕໍ່ຕ້ານລັດຖະບານ ແລະ ນຳໄປສູ່ສະຖານະການແບ່ງແຍກດິນແດນ ຫລື ການກໍ່ກະບົດ. ກົງກັນຂ້າມ, ທ່ານປະທານາທິບໍດີ ກ່າວປາໄສຕໍ່ ລັດຖະສະພາປະເທດຕຸລະກີ ວ່າ: "ເສລີພາບໃນການ ນັບຖືສາດສະໜາ ແລະ ການສະແດງອອກຄວາມຄິດເຫັນນຳໄປສູ່ ສັງຄົມພົນລະເຮືອນທີ່ເຂັ້ມແຂງ ແລະ ມີຊີວິດຊີວາເຊິ່ງມີແຕ່ຈະເຮັດໃຫ້ ປະເທດ ມີຄວາມແຂງແກ່ນຂຶ້ນ. ການຕັດສິນໃຈທີ່ຍືນຍົງ ຕໍ່ການປົກຄອງດ້ວຍກົດໝາຍ ແມ່ນວິທີການພຽງ ຢ່າງດຽວ ທີ່ຈະບັນລຸໄດ້ຄວາມໝັ້ນຄົງ ທີ່ເກີດມາຈາກຄວາມເປັນທຳ ສຳລັບໝົດທຸກຄົນ."

ເຫດຜົນທີສີ່, ໃນຍຸກທີ່ກຸ່ມຜູ້ກໍ່ການຮ້າຍ ຍຸຍົງສົ່ງເສີມ ຄວາມອາຄາດບາດໝາງ ຂອງເຂົາເຈົ້າໄປໃນທົ່ວໂລກ, ເສລີພາບໃນການນັບຖືສາດສະໜາ ແມ່ນປັດໄຈຕັດສິນຕໍ່ຄວາມໝັ້ນຄົງສາກົນ. ດັ່ງທີ່ທ່ານປະທານາທິບໍດີ ກ່າວຢູ່ທີ່ນະຄອນຫລວງໄຄໂຣ ວ່າ: "ຫາກເມື່ອໃດ ທີ່ຜູ້ກໍ່ການຮ້າຍຫົວຮຸນແຮງເຄື່ອນໄຫວຢູ່ຕາມສາຍພູເຂົາແຫ່ງໜຶ່ງ, ຜູ້ຄົນ ຈະມີ ໄພອັນຕະລາຍ ເຖິງວ່າຈະຢູ່ຫ່າງໄກ ຄົນລະຝາກ

ມະຫາສະມຸດກໍ່ຕາມ." ລັດຖະບານ ຈະຕ້ອງຮັບປະກັນວ່າແນວທາງ ນະໂຍບາຍຂອງເຂົາເຈົ້າ ກ່ຽວກັບ ສາດສະໜາ ຈະບໍ່ສ້າງຜົນກະທົບທາງລົບຕໍ່ສາກົນ. ລະບອບການປົກຄອງ ທີ່ປັ່ນປ່ວນ ກຸ່ມນັບຖືສາດສະໜາ ຫລື ຊົນກຸ່ມນ້ອຍປາຍແຖວ ຊໍ້າພັດກໍ່ຕື່ມຄວາມເຄັ່ງຕຶງສາຍສຳພັນລະຫວ່າງ ສາດສະໜາຕ່າງໆ ແລະ ເປັນການຖອກນໍ້າມັນ ຕື່ມໃສ່ໄຟແຫ່ງລັດທິຫົວຮຸນແຮງທາງສາດສະໜາ. ສະພາບແວດລ້ອມຂອງເສລີພາບ ໃນການນັບຖືສາດສະໜາທີ່ເຂັ້ມແຂງ, ໃນດ້ານໜຶ່ງ, ອຸປະຖຳຄວາມກົມກຽວຂອງຊຸມຊົນ ແລະ ເຮັດໃຫ້ສຽງ ຂອງຜູ້ຖື ສາຍກາງກ້າແກ່ນຂຶ້ນ ໃນການປະຕິເສດຢ່າງເປີດແປນ ຕໍ່ພວກຫົວຮຸນແຮງ ໃນດ້ານຄວາມຄິດເຫັນ ທາງສາດສະໜາ.

ຕາມລັກສະນະ ຂອງຜົນປະໂຫຍດ ຂອງເສລີພາບທາງສາດສະໜາ ແລະ ໄພອັນຕະລາຍຂອງການ ປະຕິເສດ, ສະຫະລັດອາເມຣິກາ ສົ່ງເສີມສິດທິພື້ນຖານສາກົນ ດັ່ງກ່າວ ວ່າເປັນເປົ້າໝາຍແກນຫລັກຂອງ ນະໂຍບາຍການຕ່າງ ປະເທດ. *ບົດລາຍງານປະຈຳປີ* ແມ່ນເຄື່ອງມືທີ່ເປັນເສົາຫຼັກເອກໃນຄວາມພະຍາຍາມ ດັ່ງກ່າວ. ບົດລາຍງານແຈ້ງໃຫ້ຮູ້ ກ່ຽວກັບນະໂຍບາຍທະວິພາຄີຂອງສະຫະລັດອາເມຣິກາ ແລະ ຍຸດທະສາດ ທາງການທູດ, ເຍືອງແສງສະຫວ່າງໃສ່ ບັນດາລັດຖະບານທີ່ລ່ວງລະເມີດ, ແລະ ໃຫ້ຄວາມຫວັງແກ່ຄົນ ຫລາຍລ້ານ ເຊິ່ງທົນທຸກ ຍ້ອນສາເຫດແຫ່ງສັດທາຂອງ ເຂົາເຈົ້າ. *ບົດລາຍງານ* ຍັງສະໜອງເປັນແຫລ່ງຂໍ້ມູນ ທີ່ໝັ້ນຄົງ ກ່ຽວກັບສາດສະໜາໃນສັງຄົມ, ແລະ ພວກຂ້າພະເຈົ້າ ຕີລາຄາສູງການປະກອບສ່ວນຂອງນັກ ເຄື່ອນໄຫວ ແລະ ນັກວິຊາການ ທີ່ນຳໃຊ້ບົດລາຍງານໃຫ້ເກີດປະໂຫຍດ ແລະ ເພີ່ມພູນຄວາມເຂົ້າໃຈ ຂອງພວກຂ້າພະເຈົ້າຂອງສາເຫດ ແລະ ຜົນກະທົບທີ່ສະຫລັບສັບຊ້ອນ ຂອງເສລີພາບໃນການ ນັບຖື ສາດສະໜາກໍ່ຄືການຂົ່ມເຫັງ. ພວກຂ້າພະເຈົ້າ ຍິນດີຮັບຟັງ ການວິເຄາະເພີ່ມຕື່ມ ໂດຍນຳໃຊ້ ບົດລາຍງານ ສະບັບນີ້, ດັ່ງເຊັ່ນດຽວກັບ ການຕຳນິຕິຊົມ ກ່ຽວກັບນະໂຍບາຍ ຕໍ່ເສລີພາບໃນການນັບຖືສາດສະໜາ ຢູ່ພາຍໃນປະເທດ ກໍ່ຄືຕໍ່ສາກົນ ຂອງສະຫະລັດອາເມຣິກາ. ເປັນຄວາມຫວັງຂອງພວກຂ້າພະເຈົ້າ ທີ່ວ່າ *ບົດລາຍງານ* ຈະຊ່ວຍກະຕຸ້ນ ການປຶກສາຫາລື ໃນເວທີສາກົນ ແລະ ຜັກດັນການຮ່ວມມື ທີ່ນຳໄປສູ່ໂລກ ທີ່ມີຄວາມເປັນທຳ ແລະ ໝັ້ນຄົງຫລາຍ ກວ່າ.

ທ່ານ ໄມເຄີລ ໂພສເນີ້
ລັດຖະມົນຕີຊ່ວຍ ດ້ານປະຊາທິປະໄຕ, ສິດທິມະນຸດ ແລະ ແຮງງານ

# ປະເທດລາວ

## ຫ້ອງການປະຊາທິປະໄຕ, ສິດທິມະນຸດ ແລະ ແຮງງານ

## ບົດລາຍງານວ່າດ້ວຍເສລີພາບທາງສາດສະໜານາໆຊາດ ປະຈໍາປີ 2009

ວັນທີ 26 ຕຸລາ ປີ 2009

ລັດຖະທໍາມະນູນອໍານວຍໃຫ້ມີເສລີພາບດ້ານສາດສະໜາ, ຢ່າງໃດກໍ່ຕາມກົດຫມາຍ ແລະ ກົດລະບຽບອື່ນໆຍັງຈໍາກັດສິດນີ້ໃນພາກປະຕິບັດ. ດໍາລັດຂອງນາຍຍົກລັດຖະມົນຕີວ່າດວ້ຍການປະຕິບັດສາດສະໜາ (ດໍາລັດເລກທີ 92) ເປັນປັດໃຈທາງດ້ານກົດຫມາຍທີ່ສໍາຄັນທີ່ກໍານົດວິທີທາງປະຕິບັດສາດສະໜາ. ເຖິງແມ່ນວ່າດໍາລັດດັ່ງກ່າວໄດ້ກໍ່ໃຫ້ເກີດມີການປະນີປະນອມທາງສາດສະໜາຫລາຍຂື້ນນັບຕັ້ງແຕ່ມີການປະກາດນໍາໃຊ້ໃນປີ 2002 ເປັນຕົ້ນມາ ແຕ່ເຈົ້າຫນ້າທີ່ຍັງໄດ້ໃຊ້ຫລາຍໆເງື່ອນໄຂຂອງດໍາລັດດັ່ງກ່າວເພື່ອຈໍາກັດການປະຕິບັດທາງສາດສະໜາບາງປະການ.

ໃນໄລຍະເຮັດບົດລາຍງານສະບັບນີ້ສະພາວະລວມຂອງການນັບຖືເສລີພາບທາງດ້ານສາດສະໜາຍັງບໍ່ມີການປ່ຽນແປງຫຍັງທີ່ສໍາຄັນ. ດັ່ງທີ່ໄລຍະເຮັດບົດລາຍງານທີ່ຜ່ານມາ ທີ່ມີພະນັກງານຢູ່ເຂດຕົວເມືອງໄດ້ມີແນວໂນມໃນການສະແດງການຍອມຮັບການປະຕິບັດສາດສະໜາໃນຂະນະທີ່ການປຸກລະດົມຢູ່ເຂດຊົນນະບົດແມ່ນຍັງປະສົບຄວາມຫຍຸ້ງຍາກຫລາຍຢູ່. ກົດຫມາຍບໍ່ໄດ້ຮັບຮູ້ເຖິງສາດສະໜາປະຈໍາຊາດແຕ່ເຖິງຢ່າງໃດກໍ່ຕາມການສະຫນັບສະໜູນທາງການເງີນ ແລະ ການສະຫນັບສະໜູນໂດຍໃຫ້ການຍົກເວັ້ນຂໍ້ຈໍາກັດໃຫ້ສາດສະໜາພຸດໄດ້ເຮັດໃຫ້ສາດສະໜາດັ່ງກ່າວຢູ່ໃນສະຖານະທີ່ດີ.ໂດຍທົ່ວໄປແລ້ວໃນທົ່ວທຸກເຂດພະນັກງານລັດຖະບານໄດ້ເຄົາລົບສິດທິທີ່ຮັບຮອງດ້ວຍລັດຖະທໍາມະນູນ ຂອງສະມາຊິກເຊື່ອຖືສາດສະໜາທັງຫມົດນັ້ນແຕ່ຢູ່ພາຍໃນຂໍ້ກໍານົດໂດຍຂອງລັດຖະບານ. ບັນດາເຈົ້າຫນ້າທີ່ຢູ 17 ແຂວງຂອງປະເທດ ຍັງສືບຕໍ່ສົງໃສການປະຕິບັດສາດສະໜາຂອງຊຸມຊົນທີ່ບໍ່ແມ່ນສາດສະໜາພຸດ ແລະບໍ່ຍອມຜ່ອນຜັນໃຫ້ປະຕິບັດສາດສະໜາຂອງຊົນກຸ່ມນ້ອຍໂດຍສະເພາະໂພຣແຕັສຕັນ ຫລື ໃຫ້ປະຕິບັດກໍ່ຕາມ ທັງໆທີ່ພວກເຂົາໄດ້ຖືກຮັບຮູ້ຢ່າງເປັນທາງການ.

ມີລາຍງານວ່າພະນັກງານທ້ອງຖິ່ນໄດ້ເຂົ້າແຊກແຊງສິດໃນການເຊື່ອຖືສາດສະໜາຢູ່ບາງແຫ່ງໂດຍສະເພາະແມ່ນຢູ່ແຂວງຫລວງນໍ້າທາ ແລະ ບໍລິຄໍາໄຊ.ໄດ້ມີລາຍງານການຈັບກຸມ ແລະ ຄຸມຂັງຊາວໂພຣແຕັສຕັນເກີດຂື້ນຢູ່ແຂວງຫລວງນໍ້າທາ,ຜົ້ງສາລີ ແລະ ສະຫວັນນະເຂດໃນໄລຍະເຮັດລາຍງານສະບັບນີ້. ຍັງມີລາຍງານວ່າພະນັກງານທ້ອງຖິ່ນໄດ້ກົດດັນໃຫ້ ຊາວໂພຣແຕັສຕັນ ປະລະຄວາມເຊື່ອຖື

ໂດຍການຂົ່ມຂູ່ວ່າຈະຈັບ ຫລື ບັງຄັບໃຫ້ອອກຈາກຫມູ່ບ້ານຢູ່ແຂວງ ບໍລິຄໍາໄຊ, ຫົວພັນ, ສາລະວັນ, ຫລວງພະບາງ, ອັດຕະປື, ອຸດົມໄຊ ແລະ ຫລວງນໍ້າທາ.

ໃນໄລຍະຊ່ວງທ້າຍຂອງການເຮັດລາຍງານສະບັບນີ້, ມີນັກໂທສອງຄົນທີ່ຮັບຮູ້ວ່າເປັນຍ້ອນກໍລະນີການປະພຶດທາງສາດສະຫນາເຊິ່ງທັງສອງແມ່ນຊາວໂພຣແຕັສຕັນ. ຍັງມີຊາວໂພຣແຕັສຕັນຜູ້ອື່ນໆທີ່ຍັງຖືກຄຸມຂັງເພາະສາຍເຫດອື່ນໆທີ່ບໍ່ແມ່ນສາດສະຫນາເຖິງແມ່ນຈະມີການສົງໃສວ່າສາດສະຫນາອາດຈະແມ່ນປັດໃຈໃນການຈັບກຸມພວກເຂົາ.

ບໍ່ມີລາຍງານອາດສະຍາກໍາ ແລະການແບ່ງແຍກຕ່າງໆທີ່ເປັນສາເຫດພື້ນຖານຍ້ອນການນັບຖື, ຄວາມເຊື່ອຖື ແລະ ການປະຕິບັດທາງສາດສະຫນາເຖິງຢ່າງໃດກໍ່ຕາມຂໍ້ຂັດແຍ່ງລະຫວ່າງຊົນກຸ່ມນ້ອຍໆ ແລະການເຄື່ອນໄຫວ  ພາຍໃນຫມູ່ບ້ານບາງຄັ້ງກໍເຮັດໃຫ້ເກີດມີຄວາມເຄັ່ງຕຶງກ່ຽວກັບການນັບຖື ສາດສະຫນາຂຶ້ນຕື່ມອີກ. ການເຜີຍແຜ່ສາດສະຫນາ ແລະ ສິດທິໃນການຊົມໃຊ້ສັບພະຍາກອນໃນຫມູ່ບ້ານແມ່ນບັນຫາຕົ້ນຕໍຂອງການໂຕ້ຖຽງ. ຂໍ້ຂັດແຍ່ງບາງຢ່າງແມ່ນເກີດຂຶ້ນຍ້ອນການປະຕິເສດຂອງກຸ່ມນັບຖືສາດສະຫນາກຸ່ມນ້ອຍບາງກຸ່ມ ໂດຍສະເພາະແມ່ນຊາວໂພຣແຕັສຕັນທີ່ບໍ່ຍອມປະກອບສ່ວນໃນພິທີທາງສາດສະໜາຂອງຊາວພຸດ ຫລືພິທີຂອງພວກທີ່ຖືຜີ. ຄວາມພະຍາຍາມທີ່ຈະລວມຕົວກັນຂອງກຸ່ມສາດສະຫນານິກາຍໂພຣແຕັກສຕັນເພື່ອຈະສ້າງໂບດເປັນອິດສະລະຈາກໂບດ ອີແວັນເຈີລິເກີລ ລາວກໍ່ຍັງສືບຕໍ່ສ້າງຄວາມເຄັ່ງຕຶງ ພາຍໃນ ບັນດາປະຊາຄົມຊາວນິກາຍໂພຣແຕັກສຕັນ.

ການສົນທະນາປຶກສາຫາລືຂອງສະຖານທູດສະຫະລັດ ກັບບັນດາລັດທະບານນັ້ນກໍ່ແມ່ນສ່ວນຫນຶ່ງຂອງນະໂຍບາຍທັງຫມົດເພື່ອສົ່ງເສີມສິດທິມະນຸດ. ສະຖານທູດ ຍັງໄດ້ສືບຕໍ່ຕິດຕໍ່ພົວພັນກັບຜູ້ນໍາທາງສາດສະຫນາເປັນໄລຍະ. ການມາຢ້ຽມຢາມຢ່າງເປັນທາງການຂອງເຈົ້າຫນ້າທີລັດທະບານສະຫະລັດເຊິ່ງລວມທັງຜູ້ຊໍານານງານຈາກຫ້ອງການສາກົນເພື່ອເສລີພາບທາງສາດສະຫນາເຊິ່ງໃນໄລຍະການພົບປະຢ່າງເປັນທາງການກັບພະນັກງານລັດທະບານລາວຢ່າງເປັນທາງການນັ້ນກໍ່ເປັນທ່າແຮງໃຫ້ຄວາມພະຍາຍາມຂອງສະຖານທູດ ດ້ວຍການຍົກສູງບັນຫາດ້ານເສລີພາບທາງສາດສະຫນາ.

**ພາກ 1. ການນັບຖືສາດສະຫນາຕ່າງໆຂອງພົນລະເມືອງ**

ປະເທດລາວມີເນື້ອທີ່ທັງຫມົດ 85,000 ໄມລ໌ມົນທົນ ແລະ ມີພົນລະເມືອງທັງຫມົດ 6.7 ລ້ານຄົນ. ຊົນເຜົ່າລາວ "ລາວລຸ່ມ" ເກືອບທັງຫມົດນັບຖືສາດສະຫນາພຸດນິກາຍເຖລະວາດ, ເຊິ່ງຊົນເຜົ່າລາວລຸ່ມ ກວມເອົາພຽງແຕ່ 40 - 50 ສ່ວນຮ້ອຍຂອງພົນລະເມືອງທັງຫມົດ. ສ່ວນທີ່ເຫລືອແມ່ນກຸ່ມຊົນເຜົ່າອື່ນໆທີ່ແຕກຕ່າງກັນ ແລະ ມີຢ່າງຫນ້ອຍ 48 ຊົນເຜົ່າເຊິ່ງຊົນເຜົ່າກຸ່ມນ້ອຍເຫລົ່ານີ້ ສ່ວນຫລາຍແມ່ນນັບຖື ສາດສະຫນາຜີ

ແລະ ຄວາມເຊື່ອຖືລະຫວ່າງກຸ່ມຕ່າງໆກໍ່ແຕກຕ່າງກັນຫລາຍ. ສາດສະໜາຜີແມ່ນມີອິດທິພົນສ່ວນຫລາຍແມ່ນຢູ່ໃນບາງບັນດາກຸ່ມສີໂນໄທເຊັ່ນ: ໄທດຳ, ໄທແດງ ແລະ ເຊັ່ນດຽວກັບໄທມອນຂະແມ ແລະ ໄທເບີໂມທິເບດ. ແມ່ນແຕ່ບັນດາລາວລຸ່ມຜູ້ທີ່ຖືສາດສະໜາເຄິ່ງພະເຄິ່ງຜີທີ່ມີ ການປະຕິບັດສາດສະໜາພຸດນິກາຍ ເຖລະວາດ.

ຊາວຄາໂທລິກ ແລະ ໂພຣແຕັສ ຕັນ ກວມເອົາປະມານສອງສ່ວນຮ້ອຍຂອງພົນລະເມືອງ, ສ່ວນບັນດາສາດສະໜານ້ອຍອື່ນໆລວມທັງສາດສະໜາບາຮາຍ, ອິດສະລາມ, ສາດສະໜາພຸດນິກາຍມະຫາຍານ ແລະ ສາດສະໜາຂົງຈື້ ແລະ ມີຈຳນວນນ້ອຍຫລາຍທີ່ບໍ່ຖືສາດສະໜາຫຍັງຫມົດ.

ສາດສະໜາພຸດນິກາຍເຖລະວາດເປັນສາດສະໜາທີ່ມີການຈັດຕັ້ງທີ່ດີເດັ່ນ ແລະ ມີຊື່ສຽງຫລາຍທີ່ສຸດຢູ່ໃນລາວເຊິ່ງມີວັດວາອາຣາມເກືອບສີ່ພັນແຫ່ງທີ່ຮັບໃຊ້ເປັນຈຸດລວມຂອງການປະຕິບັດສາດສະໜາ, ເປັນສະຖານທີ່ເຄົາລົບບູຊາກໍຄືກັບສູນກາງວິຖີຊີວິດຂອງຊາວຊົນນະບົດ. ຢູ່ໃນທຸກໆຫມູ່ບ້ານຂອງ ຊາວລາວລຸ່ມປະເພນີທາງສາດສະໜາແມ່ນຍັງຫມັ້ນຄົງເຂັ້ມແຂງຢູ່ຄືເກົ່າ. ຜູ້ຊາຍ ຊາວພຸດທັງຫມົດ ແມ່ນໃຊ້ເວລາບາງສ່ວນຂອງຊີວິດຕົນເພື່ອບວດເປັນພະສົງບຳເພັນສິນຢູ່ໃນວັດເຖິງຈະເປັນເວລາພຽງສັ້ນໆກໍ່ຕາມ. ໃນທົ່ວປະເທດມີພະສົງປະມານ 20,000 ອົງ ໃນນັ້ນເກືອບ 8,000 ອົງ ໄດ້ບັນລຸຂັ້ນ “ພຣະອາຈານ” ເຊິ່ງສະແດງວ່າໄດ້ໃຊ້ເວລາສຶກສາທຳ ແລະ ບຳເພັນກູສິນຢູ່ໃນວັດເປັນເວລາຫລາຍປີ. ນອກຈາກນັ້ນຍັງມີ ແມ່ຊີປະມານ ສີ່ຮ້ອຍຮູບເຊິ່ງໂດຍທົ່ວໄປແລ້ວຈະແມ່ນແມ່ຮ້າງແມ່ຫມ້າຍທີ່ມີອາຍຸຂ້ອນຂ້າງສູງຈຳສິນຢູ່ໃນວັດຕ່າງໆທົ່ວປະເທດ. ວັດສາດສະໜາພຸດແມ່ນຢູ່ພາຍໃຕ້ການຊີ້ນຳຂອງພະສັງຄະລາດເຊິ່ງພຳນັກຢູ່ນະຄອນຫລວງວຽງຈັນ ແລະ ກຳກັບຊີ້ນຳກິດຈະກຳຕ່າງໆຂອງສຳນັກງານສູນກາງເຊິ່ງແມ່ນທຳທຳມະສະພາ.

ເຖິງແມ່ນວ່ານິກາຍທຳມະຍຸດຂອງສາດສະໜາພຸດນັ້ນຖືກລວມເຂົ້າໃນໂຮງຮຽນມະຫານິກາຍຢ່າງເປັນທາງການຫລັງຈາກປີ 1975 ແຕ່ສາດສະໜາພຸດນິກາຍທຳມະຍຸດກໍ່ຍັງມີຄົນນັບຖືຢູ່ປະເທດລາວ. ຍັງມີລາຍງານວ່າເຈົ້າໂອວາດ ແລະ ພະສົງຢູ່ ຫລາຍວັດໂດຍສະເພາະໃນວຽງຈັນແມ່ນພະທີ່ຮຽນສຳເລັດຈາກໂຮງຮຽນສົງທຳມະຍຸດເຊິ່ງເນັ້ນນັກໃສ່ການນັ່ງສະມະທິ ແລະ ປະຕິບັດສິນຫລາຍກວ່າ.

ຢູ່ວຽງຈັນມີວັດສາດສະໜາພຸດນິກາຍມະຫາຍານຢູ່ 4 ແຫ່ງ ເຊິ່ງ 2 ແຫ່ງແມ່ນສຳລັບປະຊາຄົມຫວຽດນາມ ແລະ 2 ແຫ່ງແມ່ນຮັບໃຊ້ປະຊາຄົມຊາວຈີນ. ພະສົງຈາກຫວຽດນາມ, ຈີນ ແລະ ອິນເດຍ ໄດ້ມາ ຢ້ຽມຢາມວັດເຫລົ່ານີ້ຢ່າງເສລີເພື່ອປະກອບພິທີທາງສາດສະໜາ. ມີວັດມະຫາຍານໃຫຍ່ໆຢ່າງຕ່ຳ 4 ແຫ່ງຢູ່ໃນເຂດ

ຕົວເມືອງຕ່າງໆ ແລະ ມີວັດມະຫາຍານນ້ອຍໆ ຫລາຍແຫ່ງຕາມຫມູ່ບ້ານຕ່າງໆໃກ້ໆກັບຊາຍແດນ ຫວຽດນາມ ແລະ ຈີນ.

ພະນັກງານຢູ່ໂບດໂຣມັນຄາໂທລິກໄດ້ຄາດຄະເນວ່າມີຜູ້ເຫລື້ອມໃສສັດທາໃນໂບດໂຣມັນຄາໂທລິກ ປະມານ 45,000 ຄົນ ແລະ ສ່ວນຫລາຍກໍ່ແມ່ນຊາວຫວຽດນາມເຊິ່ງຢູ່ລວມກັນໃນກາງ ຕົວເມືອງ ແລະ ເລາະແລບຕາມແມ່ນໍ້າຂອງ ທາງພາກກາງ ແລະ ຕອນໃຕ້ຂອງປະເທດ. ໂບດຄາໂທລິກ ໄດ້ສ້າງຕັ້ງຂື້ນ ຢູ່ໃນຫ້າເຂດທີ່ມີປະຊາກອນຫນາແຫນ້ນທີ່ສຸດຂອງພາກກາງ ແລະ ພາກໃຕ້ ເຊິ່ງເປັນ ບ່ອນທີ່ຊາວຄາໂທລິກ ສາມາດປະຕິບັດການນັບຖືສາດສະຫນາຂອງເຂົາເຈົ້າໄດ້ ຢ່າງເປີດເຜີຍ. ບໍ່ມີບາດຫລວງທີ່ແມ່ນອນເພື່ອ ປະຕິບັດການເຄື່ອນໄຫວຂອງໂບດສາດສະຫນາຄາໂທລິກຍັງຖືກຈຳກັດຢູ່ທາງພາກເຫນືອ. ມີຄຸນພໍ່ 4 ອົງ ເຊິ່ງ 2 ອົງພຳນັກຢູ່ວຽງຈັນ, ແລະ ອີກສອງອົງ ແມ່ນຢູ່ເມືອງ ທ່າແຂກ ແຂວງຄຳມວນ ແລະ ປາກເຊ ແຂວງຈຳປາສັກ. ຄຸນພໍ່ທີ່ຢູ່ພຳນັກຢູ່ວຽງຈັນສອງອົງນັ້ນ, ອົງຫນຶ່ງແມ່ນປະຕິບັດຫນ້າທີ່ຢູ່ເຂດວຽງຈັນ ແລະ ພາກກາງຂອງປະເທດ, ສ່ວນອີກອົງຫນຶ່ງທີ່ຢູ່ວຽງຈັນນັ້ນແມ່ນລົງຕຳແຫນ່ງເປັນຄຸນພໍ່ທີ່ຫລວງພະບາງ. ເພິ່ນຖືກແຕ່ງຕັ້ງໃຫ້ປະຕິບັດຫນ້າທີ່ຢູ່ແຂວງພາກເຫນືອໃນຂະນະທີ່ລັດຖະບານບໍ່ອະນຸຍາດ ໃຫ້ເພິ່ນ ປະຕິບັດຫນ້າທີ່, ແຕ່ໄດ້ ອະນຸຍາດໃຫ້ເດີນທາງໄປພາກໃຕ້ເພື່ອເຂົ້າຮ່ວມພິທີທາງສາດສະຫນາເຊັ່ນ ແຂວງຫລວງພະບາງ, ໄຊຍະບູລີ ແລະບໍແກ້ວ. ຊັບສິນຂອງໂບດແຫ່ງນັ້ນກໍຖືກຍຶດຫລັງ ຈາກປີ 1975 ແລະ ກໍບໍ່ມີສະຖານທີ່ພຳນັກຢູ່ໃນເມືອງນັ້ນອີກແລ້ວ. ສູນຝຶກອົບຮົມແບບບໍ່ເປັນທາງການ ແຫ່ງຫນຶ່ງຢູ່ທ່າແຂກ ແມ່ນກຳລັງກະກຽມການສິດສອນໃຫ້ຜູ້ເຫລື້ມໃສສັດທາກຸ່ມນ້ອຍຫນຶ່ງເພື່ອໃຫ້ເປັນ ນັກບວດຮັບໃຊ້ ປະຊາຄົມຊາວຄາໂທລິກ. ພະນັກງານຢູ່ໂບດຄາໂທລິກຍັງສາມາດໄປຝຶກອົບຮົມທີ່ປະເທດອິດສຕາລີ້ ແລະ ຟີລິປີ້ນ. ນອກນັ້ນຍັງມີເມຊີ ຊາວຕ່າງຊາດຈຳນວນຫນຶ່ງທີ່ມາປະຈຳຊົ່ວຄາວຢູ່ເຂດປົກຄອງຂອງບາດຫລວງ ທີ່ວຽງຈັນ ປະຕິບັດທຳກັບຄອບຄົວ, ສະມາຊິກທີ່ຫນຸ່ມກວ່າ ແລະ ຜູ້ສູງອາຍຸ.

ປະຊາຄົມຊາວໂພເຕັກສຕັນທີ່ເຕີບໃຫຍ່ຂະຫຍາຍຕົວຢ່າງວ່ອງໄວໃນທົດສະວັດທີ່ຜ່ານມາ ແລະ ເຈົ້າຫນ້າທີ່ປະຈຳໂບດສະເລ່ຍວ່າມີຊາວໂພເຕັກສຕັນທັງຫມົດຫລາຍເຖິງ 100,000 ຄົນ. ມີຫລາຍກວ່າ 400 ກຸ່ມທີ່ສວດມົນປະກອບພິທີໃນໂບດໃນ ທົ່ວປະເທດ. ໂບດໂພເຕັກສຕັນຍັງມີຢູ່ໃນເມືອງວຽງຈັນ, ສະຫວັນນະເຂດ ແລະ ປາກເຊ ແລະ ເຈົ້າຫນ້າທີ່ປະຈຳໂບດກໍ່ຢືນຢັນວ່າ ຊາວໂພເຕັກສຕັນ ເປັນເຈົ້າຂອງໂບດສາມແຫ່ງນີ້ ແລະ ກໍ່ໄດ້ຮັບຮູ້ຈາກຂັ້ນເທິງ. ຊາວໂພເຕັກສຕັນສ່ວນຫລາຍແມ່ນ ເປັນສະມາຊິກຂອງກຸ່ມຊາວມອນຂະແມ, ໂດຍສະເພາະແມ່ນຊາວຂະມຸ ແລະ ຊາວບຣູຢູ່ສະຫວັນນະເຂດ ແລະ ແຂວງທີ່ໃກ້ຄຽງ. ຊາວໂພເຕັກສຕັນໄດ້ຂະຫຍາຍຕົວອອກຢ່າງວ່ອງໄວເຊັ່ນດຽວກັນໃນກຸ່ມ ປະຊາຄົມຊາວມົ້ງ ແລະ ຢ້າວ. ຢູ່ໃນຫລາຍໆຕົວເມືອງໂບດໂພເຕັກສຕັນໄດ້ດຶງດູດຜູ້ເຫລື້ອມໃສຫລາຍໆ ຄົນທີ່ແມ່ນລາວລຸ່ມ.  ຊາວໂພເຕັສຕັນ ທັງຫມົດແມ່ນໂຮມກັນຢູ່ນະຄອນ ຫລວງວຽງຈັນ, ແຂວງວຽງຈັນ, ໄຊຍະບູລີ, ຫລວງພະບາງ, ຊຽງຂວາງ, ບໍລິຄຳໄຊ, ສະຫວັນນະເຂດ, ຈຳປາສັກ, ອັດຕະປື ແລະ ອະດີດ ເຂດພິເສດ ໄຊສົມບູນ ແລະ ກໍ່ຍັງມີກຸ່ມນ້ອຍໆໂຮມກັນຢູ່ທົ່ວປະເທດ. ຕົວເລກຂອງຜູ້ສັດທາເຊເວັນທ ເດ

ເອດເວັນຕິດສ ນັ້ນຄ່ອຍໆເພີ່ມຂຶ້ນຫລາຍກວ່າ 1200 ຄົນທົ່ວປະເທດ, ເຊິ່ງເຕົ້າໂຮມກັນຢູ່ໃນຕົວເມືອງ ວຽງຈັນ. ຍັງມີກຸ່ມເຊເວັນເດ ເອດເວັນຕີສ ລວມຕົວກັນຢູ່ ແຂວງບໍ່ແກ້ວ, ບໍລິຄໍາໄຊ, ຈໍາປາສັກ, ຫລວງປະບາງ ແລະ ແຂວງຊຽງຂວາງ.

ສໍານັກນິກາຍຄຣິຽນທີ່ມີຜູ້ຕິດຕາມໃນປະເທດແຕ່ບໍ່ຮັບຮູ້ໂດຍລັດຖະບານນັ້ນລວມມີ ເມໂທດິສທ ແລະ ຈີໂຮເວີ ວິທເນັດເສດສ, ໂບດພຣະຄຣິດ, ເອດສໍາບລີ ອອຟ ກອດ, ລູເທີເຣນ, ໂບດເຍຊູຄຣິດ ອອຟເລດ ເຕີເດເຊັນສ (Mormons) ແລະ ບາບຕິສ. ຕົວເລກຂອງສະມາຊິກເປັນທາງການແມ່ນບໍ່ມີ.

ກຸ່ມຄຣິດສະຕຽນທີ່ໄດ້ຮັບອະນຸຍາດນັ້ນແມ່ນເປັນເຈົ້າຂອງຊັບສິນ ແລະ ອາຄານໂບດຢູ່ໃນເມືອງວຽງຈັນ ຍັງມີໂບດທີ່ບໍ່ເປັນທາງການສາມແຫ່ງຢູ່ໃນວຽງຈັນຄື ແຫ່ງຫນຶ່ງໃຊ້ພາສາອັງກິດ, ແຫ່ງຫນຶ່ງ ໃຊ້ພາສາ ເກົາຫລີ ແລະ ອີກແຫ່ງຫນຶ່ງແມ່ນໃຊ້ພາສາຈີນເຊິ່ງເປີດບໍລິການໃຫ້ຊາວໂພເຕັສຕັນຕ່າງດ້າວ ທີ່ ຢູ່ ວຽງຈັນ.

ສະເລ່ຍແລ້ວມີຜູ້ຄົນປະມານ 500 ນັບຖືສາດສະໜາອິດສະລາມ ເຊິ່ງຜູ້ຄົນເຫລົ່ານີ້ ສ່ວນໃຫຍ່ແລ້ວ ແມ່ນຊາວຕ່າງຊາດທີ່ມີເຊື້ອສາຍມາຈາກອາຊີໃຕ້ ຫລື ກໍາປູເຈຍ (ເຜົ່າຈາມ) ທີ່ໄດ້ຮັບ ອະນຸຍາດໃຫ້ ດໍາລົງຊີວິດຢູ່ລາວໄດ້ຢ່າງຖາວອນ. ຢູ່ນະຄອນຫລວງວຽງຈັນ ມີມັດສະຍິບສອງແຫ່ງທີ່ໃຫ້ ການບໍລິການຢ່າງ ບໍ່ຢຸດບໍ່ເຊົາແກ່ຜູ້ຄົນທີ່ນັບຖືສາດສະໜາອິດສະລາມນິກາຍຊຸນນີ ແຕ່ມັດສະຍິບທັງ ສອງແຫ່ງເປີດໃຫ້ ບໍລິການແກ່ຊາວນິກາຍຊີເອັດເຊັ່ນກັນ. ຍັງມີກຸ່ມຊາວມຸສລີມ ກຸ່ມນ້ອຍໆ ດໍາລົງຊີວິດຢູ່ໃນຕົວເມືອງຂອງ ແຂວງຕ່າງໆ ເຊິ່ງມີປະມານ 3-4 ຄົນຢູ່ປາກເຊ ແຂວງຈໍາປາສັກ ແລະ 2-3 ຄົນຢູ່ຫລວງພະບາງ ເຖິງວ່າ ຈະບໍ່ມີມັດສະຍິບຢູ່ເມືອງເຫລົ່ານີ້ກໍ່ຕາມ.

ຜູ້ນໍາສາດສະໜາບາຮາຍປະເມີນວ່າມີຜູ້ເຫລື້ມໃສ ແລະ ສັດທາສາດສະໜາບາຮາຍປະມານ ແປດພັນຫ້າຮ້ອຍຄົນ ແລະ ມີສະມະຊິກສະພາປົກຄອງ 9 ຄົນທີ່ຕິດຕາມເບິ່ງກິດຈະກໍາ ທາງສາດສະໜາບາຮາຍໃນສູນກາງຫ້າແຫ່ງຄື: ຢູ່ ກໍາແພງນະຄອນວຽງຈັນ ສອງແຫ່ງ, ແຂວງວຽງຈັນ ຫນຶ່ງແຫ່ງ, ຢູ່ສະຫວັນນະເຂດຫນຶ່ງແຫ່ງ ແລະ ອີກຫນຶ່ງແຫງທີ່ຕັ້ງໃຫມ່ຢູ່ເມືອງປາກຊັນ ແຂວງບໍລິຄໍາໄຊ. ຍັງມີຜູ້ທີ່ນັບຖືສາດສະໜາບາຮາຍກຸ່ມນ້ອຍໆ ຢູ່ແຂວງຄໍາມວນ ແລະ ເມືອງປາກເຊ ແຂວງຈໍາປາສັກ ແລະ ກໍາລັງມີການຂະຫຍາຍໄປແຂວງ ອຸດົມໄຊ, ຊຽງຂວາງ,ຫລວງພະບາງ ແລະ ສາລະວັນ. ມີກຸ່ມນ້ອຍໆທີ່ ນັບຖືສາດສະໜາຊິງຈື້ ແລະ ເຫລົາຈື້ ທີ່ປະຕິບັດສາດສະໜາ ຂອງເຂົ້າຢູ່ໃນບັນດາຕົວ ເມືອງໃຫຍ່ໆ

## ພາກ 2. ສະຖານະຂອງລັດທະບານໃນການນັບຖືເສລີພາບທາງສາດສະໜາ

### ໂຄງຮ່າງກົດໝາຍ/ນະໂຍບາຍ

ລັດຖະທຳມະນູນອຳນວຍໃຫ້ມີເສລີພາບດ້ານສາດສະໜາແຕ່ເຖິງຢ່າງໃດ ກໍ່ຕາມກົດໝາຍ ແລະ ກົດລະບຽບບາງຢ່າງໂດຍສະເພາະຢູ່ຂັ້ນທ້ອງຖິ່ນບາງຄັ້ງກໍ່ລະເມີດສິດທີ່ດັ່ງກ່າວນີ້ຢູ່. ມາດຕາທີ 30 ຂອງ ລັດຖະທຳມະນູນແມ່ນໃຫ້ເສລີພາບທາງສາດສະໜາ, ເຊິ່ງຄວາມຈິງແລ້ວແມ່ນຂໍ້ອ້າງຈາກລັດຖະບານ ໃນການປະນີປະນອມທາງດ້ານສາດສະໜາ. ຢ່າງໃດກໍ່ຕາມ ມາດຕາ 9 ຂອງລັດຖະທຳມະນູນນັ້ນ ໃຫ້ຫລີກລ້ຽງທຸກການກະທຳທີ່ກໍ່ໃຫ້ເກີດການແບ່ງແຍກລະຫວ່າງສາດສະໜາ ແລະ ບັນດາບຸກຄົນ. ລັດຖະບານຕີຄວາມໝາຍມາດຕາດັ່ງກ່າວເພື່ອເປັນເຫດຜົນ ໃນການຈຳກັດການປະຕິບັດສາດສະໜາ ຂອງທຸກໆກຸ່ມ ເຊິ່ງລວມທັງສາດສະໜາພຸດ ແລະ ຜີ. ລັດທະບານທັງໃນລະດັບທ້ອງຖິ່ນ ແລະ ສູນກາງ ໄດ້ອາໃສມາດຕາທີ່ 9 ຂອງລັດທະທຳມະນູນເພື່ອເປັນເຫດຜົນໃນການໜ່ວງໜ່ຽວການປະຕິບັດ ສາດສະໜາ ໂດຍສະເພາະກັບການເຜີຍແຜ່ ແລະ ການຂະຫຍາຍໂຕຂອງກຸ່ມໂພຣແຕັສຕັນກຸ່ມນ້ອຍໆ.

ລັດທະທຳມະນູນຍັງໄດ້ລະບຸວ່າ "ການເຄື່ອນໄຫວ ແລະ ການປຸກລະດົມ" ບັນດາພະສົງສາດສະໜາພຸດ, ແມ່ຊີ ກໍ່ເຊັ່ນດຽວກັບບັນບາດຫລວງຂອງສາດສະໜາອື່ນໆເພື່ອເຂົ້າຮ່ວມກິດຈະກຳຕ່າງໆຂອງລັດ ແມ່ນ "ມີຜົນປະໂຫຍດຕໍ່ປະເທດຊາດ ແລະ ປະຊາຊົນ" ເຖິງແມ່ນວ່າຈະມີການປະກາດຍອມຮັບການມີຢູ່ຂອງ ສາດສະໜາຕ່າງໆທີ່ແຕກຕ່າງກັນຢ່າງເປັນທາງການ ແຕ່ມັນກໍ່ເນັ້ນໃສ່ການບົ່ມຊ້ອນໃຫ້ມີການແບ່ງແຍກ, ຫັນເຫ ແລະ ທຳລາຍສະຖຽນລະພາບ.

ດຳລັດເລກທີ 92 ເປັນປັດໃຈທາງ ກົດໝາຍທີ່ສຳຄັນທີ່ກຳນົດ ວິທີທາງປະຕິບັດທາງສາດສະໜາ. ດຳລັດ ດັ່ງກ່າວແມ່ນບົດບາດຂອງລັດທະບານໃນການຕັດສິນສຸດທ້າຍໃນການປະຕິບັດສາດສະໜາ. ເຖິງແມ່ນວ່າ ດຳລັດດັ່ງກ່າວໄດ້ມີຄວາມພະຍາຍາມເຮັດໃຫ້ມີ ການຜ່ອນຜັນທາງສາດສະໜາຫລາຍຂຶ້ນນັບແຕ່ມີການ ປະຕິບັດນຳໃຊ້ໃນປີ 2002, ແຕ່ເຈົ້າໜ້າທີ່ຍັງໄດ້ໃຊ້ຫລາຍໆເງື່ອນ ໄຂຂອງດຳລັດດັ່ງກ່າວເພື່ອຈຳກັດ ການປະຕິບັດສາດສະໜາບາງປະການໂດຍສະເພາະໃນຂັ້ນເມືອງ ແລະ ຂັ້ນແຂວງ.

ຢູ່ໃນບັນດາ 20 ມາດຕາຂອງດຳລັດເລກທີ 92 ນັ້ນໄດ້ສ້າງຫລັກການຊີ້ນຳສຳຫລັບການເຄື່ອນໄຫວທາງ ສາດສະໜາໃນຂົງເຂດກ້ວາງຂວາງ. ໃນຂະນະທີ່ດຳລັດສະບັບນີ້ກຳນົດໄວ້ວ່າລັດຖະບານ "ເຄົາ ລົບນັບຖື ແລະ ປົກປ້ອງຄຸ້ມຄອງການເຄື່ອນໄຫວອັນຖືກຕ້ອງຕາມກົດໝາຍຂອງບັນດາຜູ້ຄົນນັບຖືສາດສະໜາ" ມັນກໍຍັງພະຍາຍາມເຮັດໃຫ້ເຊື່ອໝັ້ນວ່າການປະຕິບັດສາດສະໜານັ້ນ "ຖືກຕ້ອງສອດຄ່ອງ ກັບກົດໝາຍ ແລະ ກົດລະບຽບຕ່າງໆຂອງປະເທດ". ດຳລັດເລກທີ 92 ໃຫ້ສິດແກ່ພົນລະເມືອງລາວເຄື່ອນໄຫວທາງ

ສາດສະໜາຖືກຕ້ອງຕາມກົດໝາຍເຊັ່ນ: ການເຜີຍແຜ່ ສາດສະໜາ, ການຈັດພິມເອກະສານກ່ຽວກັບ ສາດສະໜາ ແລະ ເປັນເຈົ້າຂອງ ແລະ ສ້າງສະຖານທີ່ເພື່ອເປັນບ່ອນເຄົາລົບບູຊາ, ການສືບຕໍ່ພົວພັນກັບກຸ່ມ ສາດສະໜາອື່ນໆ ທີ່ຢູ່ຕ່າງປະເທດ ຢ່າງໃດກໍ່ຕາມສິດເຫລົ່ານີ້ຈະໄດ້ກໍ່ຕໍ່ເມື່ອໄດ້ຮັບອະນຸຍາດຕາມຂັ້ນຕອນ ທີ່ຈຳກັດ. ດຳລັດເລກທີ 92 ໄດ້ສະຫງວນ “ສິດທິ , ໜ້າທີ່ໃນການບໍລິຫານຄຸ້ມຄອງ ແລະ ສົ່ງເສີມ” ການປະຕິບັດສາດສະໜາສຳລັບສູນກາງແນວລາວຮັກຊາດໂດຍການຮຽກຮ້ອງ ໃຫ້ເກືອບທຸກທິດທາງໃນ ການປະຕິບັດສາດສະຫນາຕ້ອງໄດ້ຮັບອະນຸຍາດຈາກຫ້ອງການສູນກາງແນວລາວ ຮັກຊາດທີ່ຮັບຜິດຊອບ ຕໍ່ບັນດາບ້ານ, ເມືອງ ແລະ ລະດັບແຂວງທີ່ມີການເຄືອນໄຫວສາດສະຫນາ, ໃນບາງກໍລະນີແມ່ນຮຽກຮ້ອງ ໃຫ້ຂໍອະນຸຍາດຈາກ ແນວລາວສ້າງຊາດ ຂັ້ນສູນກາງ. ໃນທາງປະຕິບັດ ລັດທະບານໄດ້ໃຊ້ຂັ້ນຕອນ ຂໍອະນຸຍາດເພື່ອຈຳກັດການປະຕິບັດສາດສະຫນາຂອງບາງກຸ່ມ ແລະ ເປັນການຈຳກັດ ຫລືກີດກັ້ນການນຳ ເຂົ້າຕຳລາ ແລະ ອຸປະກອນທາງສາດສະຫນາເຊັ່ນດຽວກັນກັບການກໍ່ສ້າງສະຖານທີກາລະບູຊາ ຂອງກຸ່ມ ສາດສະຫນາບາງກຸ່ມທີໄດ້ຜົນ. ມີຜູ້ນຳສາດສະຫນາກຸ່ມນ້ອຍໆຫລາຍຄົນຕໍ່ວ່າຂັ້ນຕອນການຂໍອະນຸມັດ ດັ່ງກ່າວເຊີ່ງບາງຄັ້ງແມ່ນຈາກການປະຕິບັດຫນ້າທີ່ຂອງພະນັກງານທີ່ຈຳກັດສິທິຂອງພວກເຂົາ.

ລັດທະບານໄດ້ຮັບຮູ້ກຸ່ມສາດສະຫນາສີ່ກຸ່ມຢ່າງເປັນທາງການເຊັ່ນ: ສາດສະຫນາພຸດ, ຄຣິດສຕຽນ,ອິສລາມ ແລະ ບາຮາຍ. ການຮັບຮູ້ກຸ່ມຄຣິສຕຽນນັ້ນແມ່ນລວມທັງໂບດຄາໂທລິກ, ໂບດ ອີແວັນເຈລີເກີລ ລາວ ແລະ ໂບດ ເຊເວັນເດ ເອດເວີທີສ.

ເຖີ່ງວ່າດຳລັດລັດທະມົນຕີວ່າດ້ວຍການປະຕິບັດສາດສະຫນານັ້ນສ້າງຂັ້ນຕອນການລົງທະບຽນ ຂອງນິກາຍ ໃຫມ່ໆ ແຕ່ລັດຖະບານແມ່ນປາດຖະຫນາທີ່ຢາກ ເຕົ້າໂຮມການ ປະຕິບັດສາດສະຫນາເພື່ອຈຸດປະສົງ ໃນການຄວບຄຸມເຊີ່ງມັນກໍ່ ເປັນການກີດກັ້ນ ການຂຶ້ນທະບຽນໃຫມ່ທີ່ມີປະສິດທິຜົນ.

ຄຳສັ່ງຈາກສູນກາງແນວລາວສ້າງຊາດໃນເດືອນ ມີນາ ປີ 2004, ເລກທີ່ 1ໄດ້ຮຽກຮ້ອງໃຫ້ບັນດາ ກຸ່ມໂພ ເຕັກສຕັນທັງຫມົດຮ່ວມເຂົ້າເປັນສ່ວນຫນຶ່ງຂອງໂບດ LEC ຫລື ເຊວັນເດ ແອັດແວນຕິດ. ຄຳສັ່ງຍັງ ລະບຸວ່າຈະບໍ່ອະນຸຍາດໃຫ້ນິກາຍອື່ນໆຂຶ້ນທະບຽນເພື່ອເປັນມາດຕະຖານໃນການປອ້ງກັນ “ຄວາມບໍ່ລົງ ຮອຍ” ໃນປະຊາຄົມສາດສະຫນາ. ເຖີ່ງວ່າບາງນິກາຍບໍ່ໄດ້ຂຶ້ນທະບຽນກັບສູນກາງ ແນວລາວສ້າງຊາດນັ້ນ ແມ່ນບໍ່ອະນຸຍາດໃຫ້ມີການປະຕິບັດສາດສະຫນາທີ່ເຂົານັບຖື ແຕ່ຍັງມີບາງກຸ່ມກໍ່ປະຕິບັດສາດສະຫນາແບບ ມິດໆໂດຍບໍ່ມີການແຊກແຊງຈາກລັດທະບານ.

ລັດຖະບານໄດ້ຮຽກຮ້ອງໃຫ້ຫລາຍກຸ່ມສາດສະຫນາໃຫ້ລາຍງານຂໍ້ມູນກ່ຽວກັບສະມາຊິກຕໍ່ກິມວຽກງານ ສາດສະຫນາເປັນໄລຍະໆເຊີ່ງກໍປາກົດວ່າໄດ້ຍົກເວັ້ນ ສາດສະຫນາພຸດ ແລະ ຄາໂທລິກ. ລັດຖະບານ

ຍັງຈຳກັດການຈັດພິມເອກະສານກ່ຽວກັບສາດສະໜາຂອງທຸກໆສາດສະໜາເຊິ່ງກໍ່ຍົກເວັ້ນສາດສະໜາພຸດ.

ເຖິງແມ່ນລັດທະບານຈະບໍ່ຮັບຮູ້ສາດສະໜາປະຈຳຊາດແບບບໍ່ເປັນທາງການ ແຕ່ການຍົກເວັ້ນຂໍ້ຈຳກັດຫລາຍໆຂໍ້ໃຫ້ສາດສະໜາພຸດຂອງລັດຖະບານຢູ່ໃນດຳລັດເລກທີ 92 ກໍ່ສະໜັບສະໜູນໃຫ້ຄວາມສະດວກແກ່ສາດສະໜາພຸດ ສະໜັບສະໜູນໃຫ້ມີການລວມເອົາພິທີທາງສາດສະໜາພຸດເຂົ້າໃນພິທີການຕ່າງໆ ຂອງລັດໃຫ້ຫລາຍຂຶ້ນ ແລະ ທັງເປັນການສົ່ງເສີມຂອງລັດຖະບານເຮັດໃຫ້ ສາດສະໜາພຸດເປັນພາກສ່ວນໜຶ່ງທີ່ຈຳ ເປັນຂອງ ວັດທະນະທຳລາວ ແລະ ຮັບຮູ້ໂດຍຈັບຍາບັນວ່າ ສາດສະໜາພຸດນິກາຍເຖລະວາດເປັນສາດສະໜາທີ່ສຳຄັນ.

ທັງລັດຖະທຳມະນູນ ແລະ ດຳລັດເລກທີ 92 ຖືເອົາທັດສະນະທີ່ວ່າການປະຕິບັດສາດສະໜານັ້ນຈະຕ້ອງຮັບໃຊ້ຜົນປະໂຫຍດຂອງຊາດໂດຍສົ່ງເສີມການພັດທະນາ, ການສຶກສາ ແລະ ສອນໃຫ້ ບັນດາຜູ້ເຊື່ອຖືນັ້ນເປັນພົນລະເມືອງທີ່ດີຂອງຊາດ. ລັດຖະບານຖືວ່າເປັນສິດທິ ແລະ ໜ້າທີ່ຂອງຕົນທີ່ຈະຕ້ອງຄວບຄຸມດູແລການປະຕິບັດສາດສະໜາໃນທຸກລະດັບເພື່ອຮັບປະກັນໃຫ້ສາດສະໜານັ້ນຮັບໃຊ້ບົດບາດທີ່ວ່ານີ້ໃນສັງຄົມ. ໃນຕົວຈິງແລ້ວມັນເປັນການອຳນວຍໃຫ້ພະນັກງານໂດຍສະເພາະຂັ້ນແຂວງ, ເມືອງ ແລະທ້ອງຖິ່ນເຂົ້າແຊກແຊງກິດຈະກຳການເຄື່ອນໄຫວ ຂອງບັນດາກຸ່ມນັບຖືສາດສະໜານ້ອຍໆໂດຍສະເພາະຊາວໂພຣແຕັສຕັນ ຊຶ່ງ ບັນດາເຈົ້າໜ້າທີ່ມີຄວາມຮູ້ສຶກວ່າການປະຕິບັດສາດສະໜາຂອງເຂົາເຈົ້ານັ້ນບໍ່ໄດ້ສົ່ງເສີມຜົນປະໂຫຍດຂອງຊາດແຕ່ປະການໃດ ຫລືກໍ່ ເຫັນວ່າ ການເຄື່ອນໄຫວຕ່າງໆຂອງເຂົາເຈົ້າເປັນການສະແດງອອກເຖິງຄວາມບໍ່ຈົງຮັກພັກດີຕໍ່ລັດຖະບານ.

ນັບແຕ່ປີ 2001 ເປັນຕົ້ນມາລັດຖະບານໄດ້ກວດສອບເບິ່ງການເຄື່ອນໄຫວຂອງພົນລະເມືອງລາວທີ່ນັບຖືສາດສະໜາມຸດສະລິມກຸ່ມນ້ອຍໆແບບໃກ້ຊິດຂຶ້ນຕື່ມແຕ່ກໍບໍ່ໄດ້ເຂົ້າແຊກແຊງກິດຈະກຳທາງສາດສະ ໜາຂອງຊຸມຊົນແຕ່ຢ່າງໃດ. ຊຸມຊົນຊາວມຸດສະລິມ ແລະ ອິດສະລາມສາມາດປະຕິບັດສາດສະໜາຂອງເຂົາເຈົ້າໄດ້ຢ່າງເປີດເຜີຍໂດຍສາມາດໄປມັດສະຍິບສອງແຫ່ງທີ່ມີການເຄື່ອນໄຫວຢ່າງຫ້າວຫັນນັ້ນໄດ້ຢ່າງເສລີ. ພິທີສວດມົນພາວະນາປະຈຳວັນ ແລະ ພິທີສວດມົນພາວະນາ " ຈຸມມາອັດ " ປະຈຳວັນສຸກຂອງທຸກໆອາທິດນັ້ນກໍສາມາດຈັດຂຶ້ນໄດ້ໂດຍບໍ່ໄດ້ຖືກຂັດຂວາງຈາກທາງການແຕ່ຢ່າງໃດ ແລະ ການສະເຫລີມສະຫລອງທຸກຢ່າງຕາມສາດສະໜາອິສລາມແມ່ນໄດ້ຮັບການອະນຸຍາດໃຫ້ປະຕິບັດ. ພະນັກງານລັດດທະບານເຊິ່ງລວມທັງພະນັກງານສູນກາງແນວລາວສ້າງຊາດຈາກກຳແພງນະຄອນວຽງຈັນ ແລະ ທ້ອງຖິ່ນ ກໍ່ຖືກເຊີນເຂົ້າຮ່ວມການສະເຫລີມສະຫລອງຂອງສາດສະໜາມຸດສລິມເຊິ່ງຈັດໂດຍສະມາຄົມມຸດສລິມ. ຊາວມຸສະລິມແມ່ນໄດ້ຮັບອະນຸຍາດໃຫ້ເດີນທາງໄປສະແຫວງບຸນ "ຮາຈ" ນັ້ນໄດ້ ແຕ່ປະກົດວ່າບໍ່ມີການເດີນທາງໄປນັບແຕ່ປີ 2000 ເພາະຄ່າໃຊ້ຈ່າຍສູງ. ກຸ່ມເຜີຍແຜ່ຄຳສັ່ງສອນຕາບໄລທໃຫ້ແກ່ກຸ່ມເຄັ່ງຄັດໃນການປະຕິບັດ ສາດສະໜາ ກໍເດີນທາງມາຈາກປະເທດໄທ. ໃນປີ 2006 ມຸດສະລິມ

ທ້ອງຖິ່ນພ້ອມກັບບັນດາຊະມາຊິກຂອງກຸ່ມສາດສະໜາອື່ນໆ ໄດ້ເປັນຕົວແທນໃຫ້ລັດຖະບານເພື່ອເຂົ້າຮ່ວມກອງປະຊຸມສາດສະໜາ (an Interfaith Conference on Religion) ທີ່ປະເທດອິນໂດເນເຊຍ ແລະ ປະເທດກຳປູເຈ້ຍໃນຕົ້ນປີ 2008.

ສາດສະໜາຜີ ປົກກະຕິແມ່ນບໍ່ມີການແຊກແຊງຈາກລັດທະບານບໍ່ຫລາຍໃນການປະຕິບັດສາດສະໜາຂອງເຂົາເຈົ້າລັດຖະບານໄດ້ໂນ້ມນ້າວບໍ່ໃຫ້ປະຕິບັດການເຊື່ອຖືຜີ ຊຶ່ງຖືວ່າເປັນສິ່ງລ້າສະໃໝ, ເປັນໄພຕໍ່ສຸຂະພາບ ຫລື ຜິດກົດໝາຍເຊັ່ນ: ການປະຕິບັດຕາມປະເພນີ ຂອງບາງຊົນເຜົ່າທີ່ມີການຂ້າເດັກອອ່ນຊຶ່ງເກີດມາແບບບໍ່ສົມປະກອບ ຫລື ປະເພນີໃນການເກັບຮັກສາສົບຂອງຍາດພີ່ນ້ອງທີ່ຕາຍແລ້ວນັ້ນໄວ້ຢູ່ໃນບ້ານເຮືອນ. ຢູ່ໃນບາງຂົງເຂດທີ່ມີການນັບຖືສາດສະໜາຜີພາຍໃນຊົນເຜົ່າກຸ່ມນ້ອຍນັ້ນເຈົ້າໜ້າທີ່ຢູ່ທ້ອງຖິ່ນນັ້ນໄດ້ພະຍະຍາມຊັກຊວນບັນດາກຸ່ມນັ້ນຢ່າງເອົາຈິງເອົາຈັງເພື່ອໃຫ້ມານັບຖືສາດສະໜາພຸດ ແລະ ປະລະເບື້ອງຫລັງທີ່ເຂົາເຄີຍເຊື່ອຖືສິ່ງເວດມົນ ແລະ ຈິດວິນຍານເຊິ່ງລັດທະບານຄຳນຶງວ່າເປັນສິ່ງ "ຫລ້າຫລັງ".

ບຸກຄົນທີ່ຖືກຈັບ ຫລື ຖືກຕັດສິນວ່າມີຄວາມຜິດໃນຂໍ້ຫາກະທຳຜິດທາງສາດສະໜານັ້ນແມ່ນໄດ້ຮັບການປົກປ້ອງຄຸ້ມຄອງພາຍໃຕ້ກົດຫມາຍຫນ້ອຍທີ່ສຸດ. ການກັກຕົວໄວ້ນັ້ນອາດ ຈະຖືກຈອງຈຳເປັນເວລາດົນນານໂດຍບໍ່ມີການສືບສວນຄະດີ. ຫົວໜ້າສານຫລືຜູ້ພິພາກສາບໍ່ແມ່ນ ຄະນະລູກຂຸນເປັນຜູ້ຕັດສິນຄວາມຜິດຫລື ຄວາມບໍລິສຸດຂອງຈຳເລີຍໃນຄະດີຕ່າງໆຢູ່ສານ ແລະ ສິດທິ ໃນການຕໍ່ສູ້ຄະດີຂອງຜູ້ຖືກກ່າວຫາກໍມີຢ່າງຈຳກັດ. ກຸ່ມສາດສະໜາຕ່າງໆທັງໝົດລວມທັງບັນດາຜູ້ຄົນ ນັບຖືສາດສະໜາພຸດແມ່ນປະຕິບັດສາດສະໜາຂອງເຂົາເຈົ້າໃນສະພາບທີ່ເຈົ້າໜ້າທີ່ນຳໃຊ້ກົດໝາຍຕາມອາລົມ ຫລື ຕາມລຳພັງໃຈແບບບໍ່ມີກົດເກນ. ການກະທຳບາງຢ່າງທີ່ເຈົ້າໜ້າທີ່ ຕີຄວາມໝາຍວ່າ ເປັນໄພຂົ່ມຂູ່ ນັ້ນອາດໄດ້ຮັບໂທດຢ່າງຮຸນແຮງ. ການປະຕິບັດສາດສະໜາສາມາດກະທຳໄດ້ຢ່າງ "ເສລີ" ກໍຕໍ່ເມື່ອເຂົ້າໃຈເອງວ່າຜູ້ປະຕິບັດຢູ່ພາຍໃນຂອບເຂດຂອງລະບຽບຫລັກການຊີ້ນຳທີ່ລັດຖະບານວາງອອກ.

ໂດຍປົກກະຕິແລ້ວລັດຖະບານລາວແມ່ນຈະບໍ່ຮັບຮູ້ທຸກໆການກະທຳທີ່ບໍ່ຖືກຕ້ອງຕາມທາງການວາງອອກເຖິງແມ່ນວ່າຈະຢູ່ໃນກໍລະນີທີ່ຖືກບຽດບຽນກັນຍ້ອນການເຊື່ອຖືສາດສະໜາທີ່ແຕກຕ່າງກັນກໍ່ຕາມ. ຄວາມຮັບຜິດຊອບມັກຈະຕົກເປັນຂອງຜູ້ເຄາະຮ້າຍຢ່າງຫລີກລ້ຽງບໍ່ໄດ້ເຖິງແມ່ນວ່າເຈົ້າຫນ້າທີ່ເອງຈະເປັນຜູ້ກະທຳພິດກໍ່ຕາມ. ບາງກໍລະນີເຈົ້າຫນ້າທີ່ກໍ່ປັ້ນເລື້ອງຂື້ນມາອະທິບາຍຢ່າງບໍ່ຫນ້າເຊື່ອເພື່ອປົກປ້ອງບັນດາເຈົ້າຫນ້າທີ່ນຳກັນ. ໃນຂະນະທີ່ບາງຄັ້ງລັດຖະບານກໍຍອມຮັບວ່າເຈົ້າໜ້າທີ່ທ້ອງຖິ່ນມີສ່ວນຮ່ວມກັບບັນຫາທີ່ເກີດຂື້ນ, ແຕ່ກໍ່ບໍ່ມີການປະຕິບັດຫຍັງຕໍ່ພະນັກງານຜູ້ທີ່ເຮັດຜິດກົດຫມາຍ ແລະ ກົດລະບຽບຕໍ່ ເສລີພາບທາງສາດສະໜາ.

ເຖິງແມ່ນລັດຖະບານຈະບໍ່ສືບຕໍ່ສາຍພົວພັນທາງການທູດກັບ“ວາຕິກັງ” ກໍຕາມ, ແຕ່ສັນຕະປາປາປະຈໍາຢູ່ປະເທດໄທກໍໄປຢ້ຽມຢາມ ແລະໄດ້ຕິດຕໍ່ປະສານງານກັບລັດຖະບານກ່ຽວກັບໂຄງການຊ່ວຍເຫລືອຕ່າງໆ ພິເສດກໍແມ່ນໂຄງການຊ່ວຍເຫລືອຜູ້ຄົນທີ່ເປັນພະຍາດຂີ້ທູດ ແລະ ຄົນພິການ. ລັດຖະບານຮຽກຮ້ອງໃຫ້ມີການຂໍອະນຸຍາດສໍາຫລັບການມີສາຍພົວພັນຢ່າງເປັນທາງການກັບກຸ່ມທີ່ນັບຖືສາດສະໜາດຽວກັນຢູ່ຕ່າງປະເທດ. ໃນພາກປະຕິບັດນັ້ນເສັ້ນແບ່ງແຍກລະຫວ່າງສາຍພົວພັນທີ່ເປັນທາງການ ແລະ ບໍ່ເປັນທາງການແມ່ນບໍ່ແຈ້ງຊ່າວ ແລະ ໂດຍທົ່ວໄປແລ້ວກໍສາມາດສ້າງຕັ້ງສາຍພົວພັນນັ້ນ ໄດ້ໂດຍ ບໍ່ມີຄວາມຫຍຸ້ງຍາກຫລາຍປານໃດ.

ບໍ່ມີການສິດສອນເລື່ອງສາດສະໜາຢູ່ໃນໂຮງຮຽນລັດ ແລະ ກໍ່ບໍ່ມີໂຮງຮຽນໃດທີ່ຂຶ້ນກັບໂບດ ຫລື ສາດສະໜາໃດທີ່ເປີດສອນຢູ່ໃນປະເທດ. ຢ່າງໃດກໍ່ດີຍັງມີໂຮງຮຽນກຽມ ແລະ ໂຮງຮຽນສອນ ພາສາອັງກິດເອກະຊົນຫລາຍແຫ່ງໄດ້ຮັບການສະນັບສະຫນູນຈາກກຸ່ມສາດສະຫນາຈາກຕ່າງປະເທດ. ໃນພາກປະຕິບັດຕົວຈິງມີເດັກຊາຍຫລາຍຄົນທີ່ໃຊ້ເວລາບາງຊ່ວງໃນວັດສາດສະຫນາພຸດເຊິ່ງເປັນບ່ອນທີ່ພວກເຂົາໄດ້ຮັບການຮໍ່າຮຽນໃນດ້ານສາດສະຫນາກໍ່ຄືດ້ານການສຶກສາຕ່າງໆ. ຕາມຮີດຄອງປະເພນີແລ້ວວັດແມ່ນໄດ້ມີໜ້າທີ່ບົດບາດຄືໂຮງຮຽນ ແລະ ປະຈຸບັນກໍ່ຍັງສືບຕໍ່ດໍາເນີນບົດບາດດັ່ງກ່າວນີ້ຢູ່ໃນໝູ່ປະຊາຄົມນ້ອຍໆບ່ອນທີ່ການສຶກສາຢ່າງເປັນທາງການຍັງບໍ່ທັນໄປເຖິງຫລືວ່າບໍ່ມີເລີຍ. ນິກາຍຕ່າງໆຂອງ ສາດສະໜາຄຣິສຕຽນໂດຍສະເພາະໂບດອີແວນເຈີລີເກີນລາວ, ເຊເວັນເດ ແອັດແວນຕິສ ແລະ ໂບດ ແຄທໍລິກນັ້ນພາກັນເປີດໂຮງຮຽນສອນສາດສະໜາໃນວັນອາທິດໃຫ້ແກ່ບັນດາເດັກນ້ອຍ ແລະ ໜຸ່ມ ສາວ. ບັນດາສະພາປົກຄອງ ຂອງຊາວບາຮາຍ ກໍ່ຈັດການບໍາລຸງ ສາດສະຫນາໃຫ້ແກ່ເດັກນ້ອຍ ແລະ ຜູ້ໃຫຍ່ເຊັ່ນດຽວກັນ. ກຸ່ມມຸດສລິມໃຫ້ການບໍາລຸງສິດສອນເດັກນ້ອຍເຂົາເຈົ້າແບບຈໍາກັດ.

ປົກກະຕິແລ້ວລັດທະບານຈະບໍ່ຈໍາກັດການເດີນທາງຂອງພົນລະເມືອງຕົນອອກນອກປະເທດເພື່ອຈຸດປະສົງຝຶກອົບຮົມດ້ານສາດສະຫນາໄລຍະສັ້ນ.

ລັດຖະບານກໍານົດໃຫ້ມີວັນພັກທາງລັດທະການເພື່ອສະເຫລີມສະຫລອງບຸນສາດສະຫນາ ບຸນທາດຫລວງ ແລະ ບຸນປີໃໝ່ລາວ. ລັດຖະບານໂດຍທົ່ວໄປແລ້ວແມ່ນອະນຸຍາດໃຫ້ຈັດສະເຫລີມສະຫລອງ ບຸນສໍາຄັນທາງສາດສະໜາໄດ້ໂດຍບໍ່ມີການກີດກັ້ນຂັດຂວາງແຕ່ຢ່າງໃດ ແລະ ພະນັກງານລັດທະບານກໍ່ເຂົ້າຮ່ວມງານສະເຫລີມສະຫລອງບຸນສາດສະຫນາພຸດທີ່ສໍານັກງານອົງການຂອງເຂົາເຈົ້າ.

**ການຈໍາກັດຕໍ່ເສລີພາບທາງສາດສະໜາ.**

ການປະຕິບັດສາດສະໜາໃນທົ່ວປະເທດຍັງໄດ້ຖືກຈໍາກັດໂດຍກົດລະບຽບ ແລະ ນະໂຍບາຍຕ່າງໆ ຂອງທາງການທີ່ອະນຸຍາດໃຫ້ບັນດາກຸ່ມສາດສະໜາທີ່ໄດ້ຈົດທະບຽນ ຢ່າງຖືກຕ້ອງແລ້ວປະຕິບັດຄວາມເຊື່ອຖື

ຂອງເຂົາເຈົ້າໄດ້ພາຍໃນຂອບເຂດທີ່ຈຳກັດເທົ່ານັ້ນ. ຢ່າງໄດກໍ່ຕາມໂຄງຮ່າງການຈັດຕັ້ງຂອງລັດທະບານທີ່ບໍ່ລວມສູນ ແລະ ການປົກຄອງຂອງລັດທະບານກາງຕໍ່ລັດທະບານຂັ້ນແຂວງ ແລະ ເມືອງຍັງຈຳກັດເຮັດໃຫ້ການປະນີປະນອມຂອງລັດຖະບານໃນເລື່ອງສາດສະໜານັ້ນແຕກຕ່າງກັນຢູ່ໃນແຕ່ລະຂົງເຂດ ແລະ ສຳລັບແຕ່ລະສາດສະໜາ. ເຈົ້າຫນ້າທີ່ທ້ອງຖິ່ນມັກຈະບໍ່ຮັບຮູ້ເຖິງນະໂຍບາຍຂອງລັດຖະບານ ເຊັ່ນ ການປະນີປະນອມທາງສາດສະຫນາຍ້ອນການຂາດລະບຽບກົດຫມາຍໄປພ້ອມກັນກັບການກະຈາຍກົດຫມາຍນຳໃຊ້ທີ່ມີຢູ່ຍັງບໍ່ສຳເລັດ ແລະ ເມື່ອຮັບຮູ້ເຖິງກົດຫມາຍແລ້ວ ກໍ່ມັກຈະບໍ່ປະຕິບັດ.
ໃນເວລາທີ່ສູນກາງແນວລາວສ້າງຊາດໄດ້ລົງຢ້ຽມຢາມເຂດທີ່ມີຂໍ້ຂັດແຍ່ງທາງສາດສະຫນາເພື່ອໄປແນະນຳເຈົ້າຫນ້າທີ່ທ້ອງຖິ່ນກ່ຽວກັບນະໂຍບາຍຂອງລັດຖະບານນັ້ນຫລາຍໆຄັ້ງທີ່ກົມວຽກງານດ້ານສາດສະຫນາໄດ້ລະດົມເຈົ້າຫນ້າທີ່ທ້ອງຖິ່ນ ຫລື ພະນັກງານແຂວງໃຫ້ແກ້ໄຂຂໍ້ຂັດແຍ່ງ ດ້ວຍຕົວເຂົາເອງໂດຍອີງໃສ່ດຳລັດເລກທີ 92.

ຜູ້ນຳສາດສະຫນາກຸ່ມນ້ອຍໆໄດ້ເລັ່ງເຫັນເຖິງຄວາມຈຳເປັນໃນການໃຫ້ການຝຶກອົບຮົມພະນັກງານແຂວງ , ເມືອງ ແລະ ທ້ອງຖິ່ນເພີ່ມຂື້ນເພື່ອຊ່ວຍໃຫ້ເຂົາເຈົ້າເຂົ້າໃຈດຳລັດເລກທີ 92 ຫລາຍຂື້ນ ແລະ ບາງກຸ່ມກໍ່ຮຽກຮ້ອງໃຫ້ມີການແກ້ໄຂດຳລັດເພື່ອເຮັດໃຫ້ພາສາຢູ່ໃນດຳລັດນັ້ນຈະແຈ້ງ ແລະ ມີປະສິດທິຜົນໃນການບັງຄັບໃຊ້.
ຜູ້ນຳສາດສະຫນາຄິດສະຕຽນທີ່ແຂວງຫລວງພະບາງລາຍງານວ່າມີຜູ້ເຫລື້ອມໃສ ສັດທາຄິດສຕຽນປະມານ 100,000 ຄົນສາມາດຈັດກິດຈະກຳໃຫ້ການບລິການວັນເສົາໃນ 48 ແຫ່ງ: ສາມແຫ່ງເປັນເຮືອນຊານແຕ່ຖືກປັບປຽນໃຫ້ເປັນໂບດ (ເຖິງວ່າຈະບໍ່ໄດ້ລົງທະບຽບ) ແລະກໍ່ເຊັ່ນດຽວກັບອີກ 45 ຫລັງເຮືອນ. ແຕ່ໃນທາງແຕກຕ່າງພະນັກງານຢູ່ຫລວງນ້ຳທາກ່າວວ່າມີຊາວຄິດສຕຽນ 480 ຄົນ ແລະ ອີງຕາມນະໂຍບາຍແຂວງແມ່ນໃຫ້ພວກເຂົາໄດ້ປະຕິບັດສາດສະຫນາຢູ່ເຮືອນຊານໃຜລາວເຊິ່ງຊາວຄິດສຕຽນເຫລົ່ານີ້ອາດຈະຂໍອະນຸຍາດຈາກນາຍບ້ານໃຫ້ປະຕິບັດສາດສະຫນາເປັນກຸ່ມແຕ່ພະນັກງານຫລວງນ້ຳທາກໍ່ກ່າວວ່າ“ບໍ່ມີຜູ້ໃດຂໍ” ຜູ້ນຳສາດສະຫນາດັ່ງກ່າວຢູ່ແຂວງຫລວງນ້ຳທາໄດ້ກ່າວວ່າແຂວງຫລວງນ້ຳທາບໍ່ອະນຸຍາດໃຫ້ຜູ້ນຳສາດສະຫນາຄິດສຕຽນຢູ່ນອກແຂວງເຂົ້າມາໃຫ້ການຝຶກອົບຮົມຢູ່ໃນແຂວງຫລືໃຫ້ຜູ້ນຳໃນແຂວງເດີນທາງອອກນອກແຂວງເພື່ອຝຶກອົບຮົມແບບເປັນທາງການ.

ເປັນເວລາຫລາຍປີທີ່ກຸ່ມເມໂທດິສທ໌ ຍັງຄົງຍຶດຫມັ້ນຫາທາງຂື້ນທະບຽນກັບ ແນວລາວຮັກຊາດເພື່ອແຍກຕົວອອກຈາກໂບດ ອີແວັນເຈີລີເກີລ ລາວ. ໃນຕົ້ນປີ 2006 ປະກົດວ່າມີເຈົ້າຫນ້າທີ່ບ້ານ ແລະ ເມືອງບາງຄົນໄດ້ວາງທ່າທາງທີ່ແຂງຂື້ນຕ້ານກຸ່ມເມໂທດິສທີ່ບໍ່ໄດ້ຮັບອະນຸຍາດ, ຢ່າງໃດກໍ່ຕາມມີລາຍງານວ່າເຫດການໄດ້ເບົາລົງໃນທ້າຍປີ 2006 ແລະ ກໍ່ປະກົດວ່າກໍລະນີດັ່ງກ່າວກໍ່ເກີດຂື້ນຫນ້ອຍລົງນັບແຕ່ນັ້ນມາ.

ໃນລະຫວ່າງປີ 1999 - 2001 ເຈົ້າໜ້າທີ່ທ້ອງຖິ່ນໄດ້ປິດໂບດ LEC ປະມານ 20 ແຫ່ງໃນຈຳນວນ 60 ແຫ່ງທີ່ມີໃນ ແຂວງວຽງຈັນ. ໂບດທັງຫມົດນັ້ນກໍ່ອະນຸຍາດໃຫ້ເປີດຄືນໃຫມ່ເລີ່ມຕົນປີ 2002. ຢ່າງ ໃດກໍ່ຕາມ ເຖິງແມນວ່າຈະມີການຮຽກຮ້ອງ ແຕ່ເຈົ້າຫນ້າທີ່ຢູ່ຫລາຍເມືອງ ຂອງແຂວງສະຫວັນນະເຂດ ຍັງບໍ່ອະນຸຍາດ ໃຫ້ກຸ່ມສາດສະຫນາດັ່ງກ່າວຢູ່ໃນທ້ອງຖິ່ນນັ້ນເປີດໂບດ ທີກແຫ່ງຂອງທັງຫມົດປະມານ 40 ແຫ່ງທີ່ ແຂວງສະຫວັນນະເຂດຄືນໃຫມ່ ແລະ ກໍຍັງຖືກປິດຢູ່ໃນຊ່ວງຕອນທ້າຍຂອງການເຮັດບົດລາຍ ງານນີ້. ເຖິງວ່າຈະມີຂໍ້ຮຽກຮ້ອງໃຫ້ຄືນໂບດທີ່ຖືກຢຶດໂດຍເຈົ້າຫນ້າທີ່ທ້ອງຖິ່ນທີ່ບ້ານດົງຫນອງຄູນໃນປີ 2000 ຄືນໃຫ້ກຸ່ມໂພເຕັສຕັນນັ້ນ, ເຊິ່ງເຈົ້າຫນ້າທີ່ແຂວງໄດ້ກ່າວວ່າວ່າຈຳນວນຊາວ ໂພເຕັສຕັນ ຢູ່ໃນຫມູ່ບ້ານ ບໍ່ພຽງພໍທີ່ຈະມອບໂບດໃຫ້ທັງໆທີ່ຊາວໂພຣແຕັສຕັນໃນທ້ອງຖິນນັ້ນສະເຫນີວ່າມີຜູ້ສັດທາຫລາຍກວ່າ 120 ຄົນໃນຫມູ່ບ້ານ.

ໃນຈຳນວນເກືອບ 200 ກຸ່ມ ທີ່ປະຕິບັດສາດສະໜາ LEC ຢູ່ໃນບ້ານ ແລະ ເມືອງຕ່າງໆນັ້ນມີ ກຸ່ມຫລາຍ ກວ່າ 400 ກຸ່ມທີ່ບໍ່ມີໂບດຖາວອນໄດ້ພາກັນສວດມົນພາວະນາ ແລະ ປະຕິບັດສາດສະໜາຂອງເຂົາເຈົ້າ ຢູ່ຕາມບ້ານເຮືອນຂອງສະມາຊິກ, ນັບແຕ່ມີການປະກາດໃຊ້ດຳລັດເລກທີ 92 ໃນປີ 2002 ເປັນພະນັກງານ ຈາກກົມວຽກງານທາງສາດສະຫນາຂອງສູນກາງແນວລາວສ້າງຊາດໄດ້ຮັບເອົາທັດສະນະທີ່ວ່າ ການ ປະກອບພິທີທາງໂບດຢູ່ເຮືອນຄວນຈະຖືກແທນທີ່ດ້ວຍໂບດທີ່ເປັນ ອາຄານທີ່ໄດ້ກຳນົດໄວ້ໃນເມືອໃດ ກໍ່ຕາມທີ່ເຫມາະສົມ. ເຖິງຢ່າງໃດກໍ່ຕາມຕາມ ຊຸມຊົນຊາວຄິດສຕຽນທັງຫມົດແມ່ນບໍ່ສາດມາດຂໍອະນຸຍາດ ສ້າງໂບດໃໝ່ ເຖິງວ່າພະນັກງານຫລາຍທ້ອງຖິ່ນຈະຖືວ່າກຸ່ມທີ່ປະຕິບັດສາດສະຫນາຢູ່ເຮືອນຊານນັ້ນແມ່ນ ຜິດກົດຫມາຍ.

ຕົວແທນອົງການສາດສະຫນາຊີ້ແຈງວ່າຂັ້ນຕອນການຂໍອະນຸມັດກໍສ້າງອາຄານແມ່ນເລີ້ມຈາກຂັ້ນທ້ອງຖິ່ນ ແລະ ຈຶ່ງໄປຫາຂັ້ນແຂວງເຊິ່ງຫລາຍຂັ້ນຕອນໃນການອະນຸມັດແມ່ນຖືກນຳໃຊ້ ເລີ້ມຕົ້ນທີ່ພະນັກງານ ຂັ້ນບ້ານທີ່ກີດກັ້ນການສ້າງອາຄານໂບດຫລັງໃໝ່. ບໍ່ມີການອະນຸຍາດໃຫ້ລົງທະບຽນປຸກສ້າງໂບດຂອງ LEC ຫລັງໃໝ່ ຢ່າງເປັນທາງການໃນຊວງການເຮັດລາຍງານ. ມີບາງກໍລະນີ ທີ່ຂັ້ນບ້ານໄດ້ອະນຸຍາດໃຫ້ປຸກສ້າງ ໂບດໂດຍບໍ່ລໍຖ້າການອະນຸມັດເປັນທາງການຈາກຂັ້ນເທິງຢ່າງໃດກໍ່ຕາມກໍ່ມີບັນຫາເກີດຂື້ນເມື່ອ ມີພະນັກງານຂັ້ນເມືອງຫລືຂັ້ນແຂວງຮັບຮູ້ວ່າເປັນການບຸກສ້າງແບບຜິດກົດຫມາຍ. ສະນັ້ນເຮືອນຂອງ ບຸກຄົນຍັງຄົງເປັນສະຖານທີ່ແຫ່ງດຽວທີ່ຊາວ LEC ໃຊ້ປະຕິບັດສາດສະຫນາ.

ບັນດາສະພາປົກຄອງຂອງຊາວບາຮາຍຕັ້ງເມືອງຢູ່ວຽງຈັນ ແລະ ສະຫວັນນະເຂດ ແລະ ຈຳປາສັກນັ້ນ ໄດ້ປະຕິບັດສາດສະຫນາຢ່າງເສລີ ແລະ ກຸ່ມຊາວບາຮາຍປະເຊີນຫນ້າກັບຄວາມຈຳກັດຈາກເຈົ້າຫນ້າທີ່

ທ້ອງຖິ່ນຫນ້ອຍລົງຖ້າທຽບໃສ່ເມື່ອກ່ອນ. ໃນຂະນະທີ່ການຮ່ວມມືຈາກພະນັກງານຂັ້ນແຂວງໃນສະຫວັນນະເຂດແມ່ນດີ ແຕ່ຊຸມຊົນຊາວບາຮາຍຍັງຄົງປະເຊີນໜ້າກັບການຈຳກັດຈາກເຈົ້າຫນ້າທີ່ທ້ອງຖິ່ນເຊິ່ງລວມທັງການຈຳກັດທັງລັກສະນະ ແລະ ຂອບເຂດ ການປະຕິບັດສາດສະຫນາບາງຢ່າງ.

ໃນໄລຍະທີ່ເຮັດບົດລາຍງານນີ້ບໍ່ໄດ້ມີລາຍງານວ່າມີການແຊກແຊງ ຫລືບໍ່ອະນຸຍາດຈາກລັດຖະບານເພື່ອໃຫ້ສະເຫລີມສະຫລອງບຸນທີ່ສຳຄັນສຳຄັນຂອງສາດສະໜາ, ແຕ່ມີລາຍງານວ່າບໍ່ໃຫ້ຊາວໂພເຕັສຕັນຢູ່ບາງຫມູ່ບ້ານສະເຫລີມສະຫລອງບຸນຊາວຄຣິດສະຕຽນຢູ່ເຮືອນຊານຂອງພວກເຂົາ ແລະ ຈຳກັດໃຫ້ມີການເຄື່ອນໄຫວຢູ່ສະເພາະແຕ່ໃນຕຶກຂອງໂບດເທົ່ານັ້ນ. ບັນຫາດັ່ງກ່າວນີ້ສ້າງຄວາຫຍຸ້ງຫຍາກໂດຍສະເພາະແມ່ນຊາວໂພເຕັສຕັນທີ່ຍັງບໍ່ໄດ້ຮັບອະນຸຍາດໃຫ້ສ້າງໂບດຢູ່ຫມູ່ບ້ານເຂົາເຈົ້າ, ຕົວຢ່າງເຊັ່ນ: ຊາວໂພເຕັສຕັນຢູ່ບ້ານນາຄູນ ແຂວງບໍລິຄຳໄຊ, ບ້ານ ຊູນຍາ ແຂວງຫລວງນ້ຳທາ ທີ່ມີລາຍງານວ່າໄດ້ຖືກຈຳກັດບໍ່ໃຫ້ຈັດງານຊຸມນຸມ ແລະ ສະເຫລີມສະຫລອງກ່ຽວກັບສາດສະຫນາ ຢູ່ເຮືອນຊານເຂົາເຈົ້າ. ຊາວໂພເຕັສຕັນຢູ່ສອງຫມູ່ບ້ານນັ້ນຍັງບໍ່ໄດ້ຮັບອະນຸຍາດໃຫ້ສ້າງໂບດເທື່ອ.

ການຈຳກັດຮັດແຄບທີ່ມີມາເປັນເວລາດົນນານຕໍ່ການດຳເນີນງານຂອງໂບດຄາໂທລິກຢູ່ທາງພາກເໜືອນັ້ນໄດ້ສົ່ງຜົນໃຫ້ຍັງເຫລືອແຕ່ກຸ່ມນ້ອຍໆບໍ່ພຽງເທົ່າໃດກຸ່ມທີ່ປະຕິບັດສາດສະໜານີ້ຢູ່ໃນແຂວງບໍ່ແກ້ວ, ໄຊຍະບູລີ ແລະ ຫລວງນ້ຳທາ ແລະກໍ່ເຊັ່ນດຽວກັບຊຸມຊົນຫມູ່ບ້ານແຂວງວຽງຈັນ.

ຢ່າງໃດກໍ່ດີໃນໄລຍະເຮັດລາຍງານນີ້ໄດ້ມີສັນຍານທີ່ບົ່ງບອກວ່າລັດຖະບານໄດ້ ໂຍະຍານໃນການຄວບຄຸມປະຊາຄົມຊາວຄາໂທລິກ ຢູ່ທາງພາກເຫນືອ. ຊາວຄາໂທລິກຢູ່ຂົງເຂດນີ້ໄດ້ປະກອບກິດຈະກຳທາງສາດສະຫນາຢູ່ເຮືອນຊານເຂົ້າເຈົ້າເປັນແຕ່ລະໄລຍະ. ບໍ່ມີນັກບວດຄາໂທລິກ ທີ່ໄດ້ຮັບ ການອຸປະສົມບົດຢ່າງເປັນທາງການນັ້ນປະຕິບັດໜ້າທີ່ຢູ່ທາງພາກເໜືອຈັກອົງເລີຍ ແລະ ການຢ້ຽມຢາມຂອງບາດຫລວງຈາກວຽງຈັນກໍ່ມີເປັນແຕ່ລະໄລຍະ. ຢ່າງໄດກໍ່ຕາມໃນໄລຍະເຮັດລາຍງານນີ້ກໍ່ມີສັນຍານວ່າລັດທະບານໄດ້ຄ່ອຍໆໂຍະຍານການຄວບຄຸ່ມຊຸມຊົນຊາວຄາໂທລິກຢູ່ທາງພາກເຫນືອ. ຊັບສິນຂອງໂບດຫລາຍຢ່າງລວມທັງໂຮງຮຽນແຫ່ງໜຶ່ງໃນວຽງຈັນກໍໄດ້ຖືກລັດຖະບານຍຶດເອົາໄປຫລັງປີ 1975 ແລະ ຍັງບໍ່ທັນໄດ້ສົ່ງຄືນເທື່ອແລະ ລັດຖະບານກໍບໍ່ໄດ້ຈ່າຍເງິນ ຄ່າຊົດເຊີຍໃດໆໃຫ້ເລີຍ.

ລັດຖະບານຫ້າມຊາວຕ່າງປະເທດປະຕິບັດການເຜີຍແຜ່ສາດສະໜາ, ເຖິງແມ່ນວ່າລັດຖະບານອະນຸຍາດໃຫ້ບັນດາອົງການຈັດຕັ້ງຕ່າງປະເທດທີ່ບໍ່ຂື້ນກັບລັດຖະບານທີ່ມີສາຍພົວພັນກັບໂບດສາດສະໜາໃດໜຶ່ງທີ່ດຳເນີນງານຢູ່ໃນປະເທດໃດກໍ່ຕາມ. ເຖິງແມ່ນວ່າດຳລັດເລກທີ່ 92 ຈະອະນຸຍາດໃຫ້ມີການ ເຜີຍແຜ່ສາດສະຫນາໂດຍຜູ້ປະຕິບັດສາດສະຫນາແຕ່ກິດຈະກຳຕ່າງໆເຫລົ່ານັ້ນກໍ່ຕ້ອງໄດ້ຂໍອະນຸຍາດຈາກ LFNC

ເສຍກ່ອນ, ເຊິ່ງ LFNC ກໍ່ບໍ່ໄດ້ໃຫ້ອະນຸຍາດກິດຈະກຳເຫລົ່ານັ້ນ ແລະ ຖ້າຫາກພົບວ່າມີບຸກຄົນໄດ້ກະທຳກໍ່ຈະສົ່ງຕໍ່ການຖືກຄຸກຄາມ ຫລື ຈັບກູມ. ໃນໄລຍະການລາຍງານສະບັບກ່ອນເຈົ້າຫນ້າທີ່ໄດ້ກັກຕົວ ແລະ ເນລະເທດ ຊາວຕ່າງຊາດທີ່ພະຍາຍາມເຜີຍແຜ່ສາດສະຫນານັ້ນອອກນອກປະເທດແຕ່ບໍ່ໄດ້ມີລາຍງານກໍລະນີລັກສະນະນີ້ໃນໄລຍະເຮັດບົດລາຍງານສະບັບນີ້.

ລັດທະບານໄດ້ໃຫ້ອະນຸຍາດໃຫ້ຈັດພິມ, ນຳເຂົ້າ ແລະ ຈຳໜ່າຍວັດທຸທີ່ກ່ຽວກັບສາດສະຫນາພຸດ. ເຖິງແມ່ນວ່າ ດຳລັດເລກທີ່ 92 ຈະອະນຸຍາດໃຫ້ມີການຈັດພິມເອກະສານທາງສາດສະຫນາທີ່ບໍ່ແມ່ນສາດສະຫນາພຸດ ແລະ ປ່ອຍໃຫ້ ນຳເຂົ້າວັດຖຸທີ່ກ່ຽວຂ້ອງກັບສາດສະຫນາຈາກຕ່າງປະເທດ, ແຕ່ກິດຈະກຳຕ່າງໆເຫລົ່ານັ້ນ ກໍ່ຕ້ອງໄດ້ຂໍອະນຸຍາດຈາກ LFNC ເສຍກ່ອນ. ໃນຂະນະທາງປະຕິບັດ ບາງກຸ່ມແມ່ນສະມາດຈັດພິມຕຳລາທາງສາດສະຫນາເຂົາເຈົ້າແຕ່ຊາວບາຮາຍ ແລະ ຄິດສຕຽນຍັງປະເຊີນຫນ້າກັບຄວາມທ້າທາຍ. ລັດທະບານບໍ່ອະນຸຍາດໃຫ້ຈັດພິມຕຳລາໄບເບີນ ແລະ ຕ້ອງໄດ້ຮ້ອງຂໍເປັນພິເສດໃນການນຳເຂົ້າ ແລະແຈກຈ່າຍ. ບໍ່ໄດ້ຮູ້ວ່າມີການນຳເຂົ້າຕຳລາໄບເບີນໃນໄລຍະເຮັດລາຍງານສະບັບນີ້. ເຈົ້າຫນ້າທີ່ໄດ້ຍຶດເອົາບົດຄວາມທາງສາດສະຫນາ ແລະ ອຸປະກອນການສິດສອນຈາກຊາວໂພເຕັກສຕັນທີ່ນຳເຂົ້າມາຈາກຕ່າງປະເທດ ລວມທັງທີ່ຂົວມິດຕະພາບລາວໄທ ແລະ ປັບໄຫມຜູ້ທີ່ນຳເຂົ້າ. ເຖິງຢ່າງໃດກໍ່ຕາມ ບໍ່ມີລາຍງານວ່າມີການກັກຕົວທີ່ກ່ຽວຂ້ອງກັບການຍຶດວັດຖຸອຸປະກອນເຫລົ່ານີ້ ເຊິ່ງມັນເຄີຍເກີດຂຶ້ນໃນຊຸມປີຜ່ານມາ. ມີກຸ່ມທີ່ບໍ່ແມ່ນຄິດສຕຽນຫລາຍກຸ່ມລະບຸວ່າພວກເຂົາບໍ່ໄດ້ຖືກຈຳກັດໃນການນຳວັດຖຸອຸປະກອນທາງສາດສະຫນາເຂົ້າປະເທດ.

ບັດປະຊາຊົນແມ່ນບໍ່ໄດ້ລະບຸການເປັນສະມາຊິກຂອງສາດສະໜາໃດໜຶ່ງກໍ່ເຊັ່ນດຽວກັບທະບຽນສຳມະໂນຄົວ ຫລື ຢູ່ໃນໜັງສືຜ່ານແດນເຊິ່ງເປັນເອກະສານຢັ້ງຢືນສອງຢ່າງທີ່ສຳຄັນ. ບາງຄັ້ງຄາວເຈົ້າຫນ້າທີ່ກໍ່ບໍ່ຍອມອອກບັດປະຈຳຕົວໃຫມ່ ຫລື ທະບຽນ ສຳມະໂນຄົວໃຫ້ແກ່ຊາວໂພເຕັສຕັນຍ້ອນການເຊື່ອຖືທາງສາດສະຫນາຂອງເຂົາເຈົ້າ ຫລື ຂູ່ວ່າຈະບໍ່ຍອມອະນຸຍາດອອກເອກະສານ ທາງການໃຫ້ເຂົາເຈົ້າຖ້າຫາກເຂົາບໍ່ປະລະຄວາມ ເຊື່ອຖືຂອງເຂົາ.

**ການລະເມີດເສລີພາບໃນການນັບຖືສາດສະໜາ**

ບັນດາເຈົ້າໜ້າທີ່ຍັງສືບຕໍ່ຈັບກຸມບຸກຄົນຍ້ອນການເຄື່ອນໄຫວທາງສາດສະໜາຂອງເຂົາເຈົ້າ ເຖິງແມ່ນວ່າເຫດການເຊັ່ນນີ້ຈະເກີດຂຶ້ນເປັນແຕ່ລະໄລຍະ ແລະ ຫລຸດໜ້ອຍລົງຖ້າທຽບໃສ່ການເຮັດລາຍງານສະບັບຜ່ານມາ. ມີການຄຸມຂັງຄົນອື່ນໆອີກທີ່ມີເຫດຜົນຢ່າງເປັນທາງການວ່າບໍ່ກ່ຽວກັບສາດສະຫນາ ເຖິ່ງວ່າສາດສະຫນາແມ່ນໄດ້ຖືກພິຈາລະນາວ່າເປັນຕົ້ນເຫດກໍ່ຕາມ. ຄວາມພະຍາຍາມຂອງເຈົ້າຫນ້າທີ່ໃນການບັງຄັບໃຫ້ຊາວໂພເຕັກສຕັນປະລະຄວາມເຊື່ອຖືເຂົາເຈົ້ານັ້ນແມ່ນຍັງຄົງມີຢູ່ໃນບາງຂົງເຂດ. ໃນບາງກໍລະນີ

ພະນັກງານທ້ອງຖິ່ນກໍ່ຂົ່ມຂູ່ກຸ່ມສາດສະໜາກຸ່ມນ້ອຍໆວ່າຈະຈັບກຸມ ຫລື ຂັບໄລໃຫ້ອອກຈາກຫມູ່ບ້ານຖ້າຫາກບໍ່ປະຕິບັດຕາມ.

ໃນໄລຍະຕອນທ້າຍຂອງການເຮັດລາຍງານນີ້ ມີນັກໂທດທີ່ກ່ຽວຂ້ອງກັບສາດສະໜາສອງຄົນຍັງຖືກຄຸມຂັງ. ໃນເດືອນ ມັງກອນ ປີ 2007 ທ້າວຄຳສອນ ບັກຄຳ ເຊິ່ງເປັນຊາຍເຜົ່າໄທດຳເຊິ່ງລະບຸວ່າເປັນຜູ້ນຳຊາວໂພເຕັກສຕັນໄດ້ຖືກຈັບກຸມຢູ່ແຂວງອຸດົມໄຊ. ລັດທະບານບໍ່ປະສົງຈະຮັບຮູ້ວ່າລາວຖືກຄຸມຂັງ ແລະ ຄຳຮຽກຮ້ອງຂໍຂໍ້ມູນກ່ຽວກັບສະຖານະພາບຂອງລາວຫລາຍຄັ້ງນັ້ນກໍ່ບໍ່ມີຄຳຕອບ. ໃນປີ 1999 ເຈົ້າຫນ້າທີ່ໄດ້ຈັບກຸມສະມະຊິກ ໂບດ LEC ຢູ່ແຂວງອຸດົມໄຊເຊິ່ງແມ່ນ ທ້າວຍອດ ແລະ ທອງຈັນ ແລະ  ຕັ້ງຂໍ້ຫາວ່າເປັນທໍລະຍົດ ແລະ ເປັນພວກຕໍ່ຕ້ານລັດຖະບານ ເຊິ່ງການຈັບກຸມນີ້ ປະກົດວ່າແມ່ນຍ້ອນ ພວກເຂົາເຜີຍແຜ່ສາດສະໜາ. ທ້າວ ຍອດຖືກຕັດສິນຈຳຄຸກ 12 ປີ ແລະ ທອງຈັນຖືກຕັດສິນຈຳຄຸກ 15 ປີ. ໃນເດືອນ ຕຸລາປີ 2006 ທ້າວຍອດເສຍຊີວິດໃນເວລາຢູ່ໃນຄຸກ. ທອງຈັນ ຖືກຕັດສິນຈຳຄຸກ 15 ປີ ແລະ ຫລຸດໂທດເຫລືອ 10 ປີ ໃນຊວງທ້າວປີ 2006, ເຊິ່ງ ຊ່ວງຕອນທ້າຍຂອງລາຍງານນີ້ ຍັງຄົງຖືກຕັດອິດສະຫລະພາບຢູ່ໃນຄຸກແຂວງອຸດົມໄຊ.

ບັນຫາທັງຫມົດແມ່ນມີສ່ວນກ່ຽວຂອ້ງກັບການແຊກແຊງໃນເລື້ອງການປະຕິບັດສາດສະໜາຢູ່ ຂັ້ນແຂວງ, ເມືອງ ແລະ ທ້ອງຖິ່ນ.

ໃນເດືອນເມສາ ປີ 2009 ພະນັກງານຂັ້ນເມືອງໄດ້ລົງໂທດຊາວຄຣິດສຕຽນທີ່ຮ່ວມກັນປະຕິບັດສາດສະໜາຢູ່ເຮືອນຊານໃນບ້ານໂນນສົມບູນ ແຂວງບໍລິຄຳໄຊ ເຊິ່ງເປັນບ່ອນທີ່ໂບດບໍ່ໄດ້ຮັບອະນຸຍາດນັ້ນໄດ້ຖືກທຳລາຍ. ອີງຕາມການລາຍງານລ້າສຸດກ່າວວ່າພະນັກງານທ້ອງຖິ່ນໄດ້ອະນຸຍາດໃຫ້ມີການປະຕິບັດສາດສະໜາຢູ່ເຮືອນຊານອີກຄືນໃໝ່. ໃນເດືອນ ສິງຫາ ປີ 2008 ພະນັກງານທີ່ເມືອງບໍລິຄັນ ແຂວງບໍລິຄຳໄຊໄດ້ລາຍງານວ່າໄດ້ລົງໂທດສະມະຊິກປະມານ 150 ຄົນທີ່ຮ່ວມກັນປະຕິບັດສາດສະໜາຢູ່ເຮືອນຊານ ແລະ ປະກາດວ່າການປະຕິບັດສາດສະໜາເຊັ່ນນັ້ນສາມາດປະຕິບັດໄດ້ແຕ່ຢູ່ໃນໂບດ. ໃນຊວງຕອນຕົ້ນຂອງການເຮັດລາຍງານນີ້ໄດ້ມີລາຍງານເປັນທາງການວ່າໄດ້ທຳລາຍໂບດຂອງກຸ່ມດັ່ງກ່າວໃນບ້ານ ທົ່ງພັນຄຳ ເຊິ່ງປະກົດວ່າໂບດດັ່ງກ່າວໄດ້ສ້າງໂດຍໄດ້ຮັບອະນຸຍາດຈາກທ້ອງຖິ່ນ ເຖິ່ງວ່າຈະບໍ່ໄດ້ຮັບອະນຸຍາດຈາກຂັ້ນແຂວງກໍ່ຕາມ.

ໃນເດືອນກໍລະກົດ ປີ 2008 ມີລາຍງານວ່າເຈົ້າຫນ້າທີ່ຕຳຫລວດທີ່ເມືອງອາດສະພັງທອງ ແຂວງສະຫວັນນະເຂດໄດ້ເຂົ້າແຊກແຊງການປະຕິບັດສາດສະໜາຂອງຊາວຄິດສຕຽນທີ່ບ້ານບູນຄຳ ແລະ ຈັບກຸມນັກບວດ ແລະ ສະມະຊິກໂບດອີກສີ່ຄົນເປັນເວລາສອງວັນ, ເຊິ່ງໃນໄລຍະເຮັດບົດລາຍງານນີ້ມີຂ່າວວ່າພວກເຂົາຖືກກັກໄວ້ຢູ່ໃນສາງເພື່ອເກັບອາຫານ. ນັກບວດ ແລະ ສະມາຊິກໂບດສອງຄົນໄດ້ຖືກຈັບກຸມອີກ

ເທື່ອໜຶ່ງໃນຊ່ວງເດືອນກໍລະກົດ ແລະ ກໍ່ຖືກປ່ອຍໂຕໃນເດືອນຕຸລາ. ມີລາຍງານວ່າ ມີຊາວຄຶດສຕຽນ 55 ຄົນໄດ້ຖືກຂັບໄລ່ໃຫ້ອອກຈາກຫມູ່ບ້ານໃນຊ່ວງເຮັດລາຍງານສະບັບນີ້. ພະນັກງານອະວຸໂສຈາກກະຊວງປ້ອງກັນຄວາມສະງົບໄດ້ອະທິບາຍວ່າຄູນພໍ່ອີງດັ່ງກ່າວໄດ້ຍ້າຍເຂົ້າໄປຢູ່ບ້ານບູນຄາມ ໃນຊວງປີ 2005 ແລະ ປະຕິເສດທີ່ຈະປ່ຽນສຳມະໂນຄົວຂອງລາວພາຍໃນຫົກເດືອນຕາມຫລັກການ. ບໍ່ໄດ້ມີຄຳຢືນຢັງ ຫລື ຄຳອະທິບາຍຈາກພະນັກງານດັ່ງກ່າວກ່ຽວກັບລາຍງານການຂັບໄລ່ສະມາຊິກໂບດນັ້ນອອກຈາກບ້ານ.

ໃນເດືອນ ກໍລະກົດ ປີ 2008 ມີລາຍງານວ່າມີຊາຍຊາວຄຣິດສຕຽນເສຍຊີວິດທີ່ບ້ານກະຕັນ ເມືອງຕະໂອຍ ແຂວງສາລະວັນຫລັງຈາກເຈົ້າໜ້າທີ່ ໄດ້ບັງຄັບໃຫ້ຊາຍຄົນນັ້ນດື່ມເຫລົ້າ ແລະ ມີລາຍງານວ່າຍາດຕິພີ່ນ້ອງຂອງຊາຍຄົນນັ້ນຖືກປັບໄໝຫລັງຈາກຈັດພິທີສົບແບບສາດສະໜາຄຣິດສ. ອີກສອງສາມວັນຕໍ່ມາກໍ່ໄດ້ມີລາຍງານວ່າເຈົ້າໜ້າທີ່ທ້ອງຖິ່ນໄດ້ກັກໂຕຊາວຄຶດສຕຽນ 80 ຄົນ ຈາກ 17 ຄອບຄົວ ແລ້ວກໍ່ບັງຄັບເຊິ່ງລວມທັງການກັກຕຸນອາຫານເຂົາເຈົ້າເພື່ອໃຫ້ເຂົາປະລະຄວາມເຊື່ອຖື.ໃນເດືອນກັນຍາມີລາຍງານວ່າເຈົ້າໜ້າທີ່ແຂວງ ແລະ ເມືອງໄດ້ຈັດປະຊຸມທີ່ຫມູ່ບ້ານແຫ່ງນັ້ນຕາມຄຳຮຽກຮ້ອງຂອງລັດທະບານຂັ້ນສູນກາງໂດຍຕອບສະໜອງຕາມຄຳຮຽກຮ້ອງຂອງສາກົນກ່ຽວກັບສະຖານະການດັ່ງກ່າວ.ພະນັກງານລັດທະບານອະວຸໂສໄດ້ກ່າວວ່າການສືບສວນສອບສວນສະແດງໃຫ້ເຫັນວ່າການຕາຍນັ້ນ ແມ່ນເປັນຍ້ອນການຕິດເຫລົ້າ ແລະ ພິທີປົງສົບນັ້ນແມ່ນຄວາມບໍ່ເຂົ້າໃຈກັນລະຫວ່າງກຸ່ມຊາວຄຣິດສ ແລະ ກຸ່ມທີ່ບໍ່ແມ່ນຊາວຄຣິດສໃນຫມູ່ບ້ານແຫ່ງນັ້ນ. ພະນັກງານທ່ານນັ້ນ ຍັງໄດ້ກ່າວຕື່ມວ່າບໍ່ມີຜູ້ໃດ ຖືກບັງຄັບໃຫ້ປະລະຄວາມເຊື່ອຖືເຂົາເຈົ້າແຕ່ຫາກວ່າມີບາງຄົນອາສາສະມັກປະລະເອງ. ເຖິງຢ່າງໃດກໍຕາມ ອີງຕາມການລາຍງານຕາມພາຍຫລັງໄດ້ແຈ້ງວ່າຊາວບ້ານບາງຄົນຕ້ອງການແຈ້ງເຖິງສາດສະໜາທີ່ເຂົາເຊື່ອຖື ແຕ່ເຈົ້າໜ້າທີ່ປະຕິເສດບໍ່ອະນຸຍາດໃຫ້ເຂົາເຈົ້າປະຕິບັດເຊັ່ນນັ້ນ.

ໄດ້ມີຫລາຍກໍລະນີ ທີ່ຊາວຄຶດສຕຽນຖືກຈັບດ້ວຍເຫດຜົນອື່ນໆ ທີ່ບໍ່ກ່ຽວກັບສາດສະໜາ ແຕ່ຫາກວ່າອາດຈະແມ່ນຍ້ອນສາດສະໜານັ້ນເປັນສາເຫດຕົ້ນຕໍ.

ມີລາຍງານວ່າ ໃນເດືອນເມສາປີ 2009 ນັກບວດສອງຄົນສຸດທ້າຍຈາກ ກຸ່ມນັກບວດ 8 ຄົນທີ່ຖືກຈຳຄຸກຢູ່ແຂວງອຸດົມໄຊນັ້ນໄດ້ຖືກປ່ອຍໂຕ. ໃນເດືອນພະຈິກປີ 2008 ໄດ້ມີ 6 ຄົນໃນກຸ່ມນັ້ນຖືກປ່ອຍໂຕ ແລະ ແຕ່ລະຄົນຖືກສັ່ງໃຫ້ຈ່າຍຄ່າປັບໄໝ່ 350 ດອນລາ (3,000,000 ກີບ) ເປັນຄ່າກັກໂຕ. ທັງແປດຄົນຖືກກັກໂຕໃນຂະນະທີ່ຢຸດເຊົາ ແລະ ຫາທາງຂ້າມໄປຝັ່ງໄທທີ່ຊາຍແດນແຂວງບໍ່ແກ້ວໃນຊ່ວງເດືອນ ມີນາ ປີ 2008. ບໍ່ມີສິ່ງໃດທີ່ບົ່ງບອກວ່າພວກເຂົາຈະຂ້າມໄປແບບຖືກຕ້ອງຕາມກົດຫມາຍ ແລະ ສະຖານະການຂອງພວກເຂົາກໍ່ຫຍຸ້ງຫຍຸ້ງຫຍາກຂຶ້ນເມື່ອເຈົ້າໜ້າທີ່ກວດພົບວ່າພວກເຂົາມີເອກະສານສຳຄັນໃນການແບ່ງແຍກສາດສະໜາຢູ່ໃນລາວ.

ໃນຕົ້ນປີ 2008 ມີລາຍງານວ່າ ຫົວຫນ້າຄອບຄົວຈາກ 10 ຄອບຄົວຂອງກຸ່ມຄິດສຕຽນມົ້ງ ຂະມຸໄດ້ກັບຄືນໄປຫວຽດນາມ. ອີງຕາມການລາຍງານດັ່ງກ່າວນັ້ນຍັງຮູ້ອີກວ່າເຈົ້າຫນ້າທີ່ລາວໄດ້ສືບພົບວ່າແຕ່ກ່ອນຫົວຫນ້າຄອບຄົວເຫລົ່ານີ້ໄດ້ຍ້າຍມາແຕ່ຫວຽດນາມເພື່ອໄປຢູ່ວັງວຽງເຂດພາກເຫນືອຂອງແຂວງວຽງຈັນໄດ້ຫລາຍກວ່າ 7 ປີແລ້ວ ແລະ ຢູ່ລາວແບບຜິດກົດຫມາຍໂດຍບໍ່ມີເອກະສານໃດໆ. ພະນັກງານເມືອງວັງວຽງກ່າວວ່າໄດ້ອະນຸຍາດໃຫ້ຄອບຄົວມົ້ງ ຂະມຸ 10 ຄວບຄົວນີ້ໃຫ້ຍ້າຍຈາກແຂວງວຽງຈັນເພື່ອໄປແຂວງໄກ້ຄຽງຫລັງຈາກກຸມກອງໂຈນຕິດອາວຸດໂຈມຕີຄ້າຍທະຫານທີ່ຢູ່ໄກ້ກັບວັງວຽງໃນເດືອນ ກຸມພາ ປີ 2007 ເຊິ່ງມີລາຍງານວ່າການໂຈມຕີດັ່ງກ່າວເຮັດໃຫ້ທະຫານລາວເສຍຊີວິດສອງຄົນ. ຢ່າງໄດກໍ່ຕາມ ພະນັກງານເມືອງວັງວຽງບໍ່ໄດ້ໃຫ້ເອກະສານຍົກຍ້າຍຕາມຕ້ອງການໃນການຍົກຍ້າຍ ແລະ ຕາມລາຍງານຫຼັງຈາກນັ້ນບໍ່ດົນພະນັກງານກໍ່ບອກໃຫ້ຄອບຄົວນັ້ນກັບຄືນວັງວຽງ. ມີລາຍງານວ່າບັນດາຊາຍທີ່ເປັນຫົວຫນ້າຄອບຄົວມີຄອບຄົວມົ້ງ ເຈັດຄອບຄົວ, ຂະມຸ ສາມຄອບຄົວນັ້ນໄດ້ຖືກຄຸມຂັງທີ່ຄຸກຫີນເຫີບ ແຂວງວຽງຈັນ. ມີລາຍງານວ່ານຶ່ງໃນ 10 ຄົນທີ່ຖືກຄຸມຂັງນັ້ນເສຍຊີວິດໃນທ້າຍປີ 2007 ແລະ ອີກຄົນນຶ່ງເສຍຊີວິດໃນເດືອນພຶດສະພາປີ 2008. ທີ່ເຫລືອແປດຄົນນັ້ນຍັງຄົງຖືກຄຸມຂັງອີກຫລາຍກວ່າຫນຶ່ງປີ ກ່ອນຖືກເນລະເທດ.

ໃນເດືອນ ກຸມພາປີ 2008 ມີລາຍງານວ່າ ເຈົ້າຫນ້າທີ່ໄດ້ຈັບກຸມ 58 ຄົນຈາກ 17 ຄອບຄົວໃນໄລຍະການປຸ້ນສະດົມທີ່ບ້ານ ໄຊຈະເລີນ ແລະ ບ້ານໄຟ ແຂວງບໍ່ແກ້ວ. ຜູ້ທີ່ຖືກຈັບກຸມທັງຫມົດນັ້ນລະບຸວ່າເປັນຊາວມົ້ງຄິດສຕຽນທີ່ລົບຫນີ້ການບຽດບຽນ ມາຈາກຫວຽດນາມໃນຊ່ວງຕົ້ນປີ 2002 ແລະ ກໍ່ປາກົດວ່າເປັນສ່ວນຫນຶ່ງຂອງກຸ່ມຊາວຄຣິດສຕຽນທີ່ບ້ານໄຊຈະເລີນ. ມີຂ່າວແຜ່ກະຈາຍອອກໄປວ່າຜູ້ທີ່ຖືກຈັບກຸມຈຳນວນຫນຶ່ງຫລື ອາດຈະທັງຫມົດນັ້ນໄດ້ຖືກຕັດສິນຕັດອິດສະຫລະພາບ ຫລື ເນລະເທດໄປຫວຽດນາມ. ອີງການຕ່າງປະເທດແຫ່ງນຶ່ງອ້າງວ່າ ມີຜູ້ນຳໂບດຊາວມົ້ງເກົ້າຄົນຈາກເຂດນັ້ນຖືກຕັດສີຕັດອິດສະຫລະພາບ 15 ປີໃນຄຸກໃນວັນທີ່ 22 ກຸມພາ ປີ 2008 ຫລັງຈາກການປຸ້ນສະດົມຄັ້ງນີ້. ຢ່າງໃດກໍ່ຕາມບໍ່ມີລາຍງານຈາກທ້ອງຖິ່ນເພື່ອເຮັດໃຫ້ລາຍງານການຕັດອິດສະຫລະພາບດັ່ງກ່າວຫນັກແຫນ້ນຂຶ້ນ ແລະ ລັດທະບານກໍ່ປະຕິເສດວ່າບໍ່ໄດ້ຕັດສິນຕັດອິດສະຫລະພາບໃຜກໍ່ຕາມຢູ່ເຂດນັ້ນ. ມີພະນັກງານອາວຸໂສທ່ານໜຶ່ງຢືນຢັນວ່າຜູ້ຄົນເຫລົ່ານັ້ນໄດ້ຖືກເນລະເທດໄປຫວຽດນາມແຕ່ການເນລະເທດນັ້ນກໍ່ບໍ່ໄດ້ມີໂຕຊີ້ບອກວ່າມີຜູ້ໄດ້ເຂົ້າມາຢູ່ລາວແບບຖືກກົດ ຫມາຍ. ພະນັກງານທ່ານນັ້ນຍັງລະບຸວ່າການເນລະເທດນັ້ນຍອ້ນເຫດຜົນຫລັງຈາກການກວດສອບການປະທະກັນລະຫວ່າງເຈົ້າຫນ້າທີ່ ແລະ ພວກພໍ່ຄ້າຢາ.

ການປະທະຂອງເຈົ້າຫນ້າທີ່ໃນເດືອນ ກໍລະກົດປີ 2007 ເຮັດໃຫ້ມີຊາວມົ້ງຄິດສຕຽນເສຍຊີວິດ 13 ຄົນ ແລະ ຜູ້ອື່ນໆຈາກບ້ານໄຊຈະເລີນຖືກຈັບກຸມ, ມີລາຍງານວ່າການປະທະກັນນັ້ນແມ່ນອາດສືບເນື່ອງມາຈາກຍັງມີກອງໂຈນທີ່ເຄື່ອນໄຫວຢູ່ແຕ່ຈຳນວນຫລຸດລົງ ເຖິ່ງວ່າລາຍງານນັ້ນຈະປະກົດວ່າແມ່ນຄວາມຈິ່ງແຕ່ພະນັກງານລັດທະບານໄດ້ໃຫ້ຄຳຕອບວ່າແມ່ນກຸ່ມທີ່ມີສ່ວນຮ່ວມກັບການຄ້າຂາຍຢາເສບຕິດທີ່ຜິດກົດຫມາຍ ແລະຄັດຂືນການຈັບກຸມຂອງເຈົ້າຫນ້າທີ່. ແຂວງບໍ່ແກ້ວເປັນເຂດທີ່ມີຊາຍແດນຕິດກັບພະມ້າ ແລະ ໄທເຊິ່ງຕັ້ງຢູ່ເຂດຫນື່ງຂອງເສັ້ນທາງລຳລຽງຢ່າບ້າເສັ້ນສຳຄັນ ສະນັ້ນມັນຈິ່ງເປັນເຂດທີ່ມີການເອົາໃຈ

ໃສ່ປະຕິບັດກົດຫມາຍຢ່າງເຄັ່ງຄັດ. ຕໍ່ມາກໍ່ມີລາຍງານວ່າການໄປມາຂອງຜູ້ຄົນຢູ່ເຂດນັ້ນກໍ່ຖືກຈຳກັດສູງໃນບາງຄັ້ງ ແລະ ຫລາຍຄົນກໍ່ຖືກຈຳຄຸກ ເຊິ່ງລວມທັງຜູ້ນຳໂບດເຜົ່າມົ້ງທີ່ຖືກຕັດສິນຈຳຄຸກ 5 ປີ.ລາຍງານຕາມມາໄດ້ອ້າງວ່າ ໂບດຢູ່ບ້ານໄຊຈະເລີນ ທີ່ມີສະມະຊິກຫລາຍກວ່າພັນຄົນກ່ອນເຫດການດັ່ງກ່າວນັ້ນຕໍ່ມາກໍ່ມີຫນອ້ຍກວ່າ 30 ຄົນ ແລະ ກໍ່ຖືກຫຍຸບໃນເວລາຕໍ່ມາ.
ໃນເດືອນ ກຸມພາ ປີ 2007 ພະນັກງານແຂວງບໍລິຄຳໄຊ ລະບຸວ່າມີຄູບາສອງອົງຖືກຈັບໃນຂໍ້ຫາພະຍາຍາມອຸປະສົງບົດໂດຍບໍ່ໄດ້ຮັບອະນຸຍາດຈາກລັດທະບານ ແລະ ມີການສະເຫລີມສະຫລອງແບບບໍ່ເຫມາະສົມຫລັງຈາກພິທີດັ່ງກ່າວ ແລະຖືກຈັບໃນໄລຍະເວລາສັ້ນໆ ກ່ອນໄດ້ຮັບການປ່ອຍໂຕ.

ມີຫລາຍກໍລະນີທີ່ບັນດາພະນັກງານກົດດັນຊາວໂພເຕັກສຕັນໃຫ້ປະລະຄວາມເຊື່ອຖືຂອງເຂົາເຈົ້າ. ໃນເດືອນກໍລະກົດປີ 2008 ມີຊາວຄິດສຕຽນຢູ່ຫລາຍໆຫມູ່ບ້ານຢູ່ແຂວງຫລວງພະບາງເຊິ່ງລວມທັງ ບ້ານຫວຍອານ ທີ່ເມືອງຈອມເພັດ ເຊິ່ງມີລາຍງານວ່າຖືກກົດດັນເພື່ອໃຫ້ປະຕິເສດຄວາມເຊື່ອຖືໂດຍພະນັກງານສານ ແລະ ເຈົ້າຫນ້າທີ່ຕຳຫລວດ. ຊາວຄິດສຕຽນໄດ້ເວົ້າວ່າພວກເຂົາຖືກບັງຄັບໃຫ້ສົ່ງຕຳລາ ໄບເບີນ ແລະ ຕຳລາສວດມົນຕ່າງໆເພື່ອເອົາໄປຈູດເຜົາຖິ້ມ. ອີງຕາມຂໍ້ມູນຈາກອົງກອນທີ່ບໍ່ຂື້ນກັບລັດທະບານແຫ່ງຫນຶ່ງກ່າວວ່າ ບໍ່ມີຜູ້ໃດຖືກຈັບ ແລະ ກໍບໍ່ມີຜູ້ໃດປະລະຄວາມເຊື່ອຖືຂອງເຂົາເຈົ້າ. ຫ້ອງການສູນກາງແນວລາວຮັກຊາດແຂວງຖືກມອບຄວາມເຊື່ອຖືຈາກຜູ້ນຳສາດສະຫນາໃຫ້ເຂົ້າມາແກ້ໄຂບັນຫາທີ່ເກີດຂື້ນຢູ່ເມືອງຈອມເພັດໂດຍເຊີນພະນັກງານທ້ອງຖິ່ນ, ເຈົ້າຫນ້າທີ່ຕຳຫລວດເຂົ້າໃນເມືອງຫລວງພະບາງເພື່ອເບິ່ງຄືນກ່ຽວກັບດຳລັດເລກທີ 92. ຫ້ອງການສູນກາງແນວລາວສ້າງຊາດແຂວງຍັງໄດ້ຮັບຄວາມເຊື່ອຖືມາກ່ອນໃນການແກ້ໄຂບັນຫາທີ່ເກີດຂື້ນຢູ່ເມືອງ ງອຍ ທີ່ມີຊາວຄິດສຕຽນເຈັດຄົນຖືກຈັບກຸມໃນເດືອນມັງກອນ ປີ 2008 ແລະ ກໍ່ຖືກປ່ອຍໂຕ 3 ເດືອນຕໍ່ມາ.  ຜູ້ນຳຊາວຄິດສຕຽນຂັ້ນແຂວງກ່າວວ່າເຖິງວ່າບັນຫາທີ່ເມືອງງອຍ ຍັງຄົງດຳເນີນຢູ່ນັ້ນ ຊາວຄິດສຕຽນຢູ່ເມືອງອື່ນໆອີກສິບເມືອງກໍຍັງຄົງປະຕິບັດສາດສະຫນາແບບປົກກະຕິ.

ຍັງມີລາຍງານກ່ຽວກັບກໍລະນີນີ້ຢູ່ອີກສີ່ແຂວງໃນເດືອນກໍລະກົດ ປີ 2008. ກໍລະນີດັ່ງກ່າວລວມທັງຜູ້ນຳຊາວຄິດສຕຽນຖືກຈັບຢູ່ບ້ານຂອນງອຍ ເມືອງ ວຽງພູຄາ ແລະ ອີກຄົນຫນຶ່ງທີ່ເມືອງ ສິງ ທັງຫມົດນັ້ນແມ່ນຢູ່ແຂວງຫລວງນ້ຳທາ. ອີງຕາມການລາຍງານຂອງພະນັກງານແຂວງຫລວງນ້ຳທາໄດ້ກ່າວວ່າບັນຫາຢູ່ບ້ານຂອນງອຍນັ້ນແມ່ນເປັນຍ້ອນຜູ້ນຳສາດສະຫນາຈາກແຂວງບໍ່ແກ້ວທີ່ຢູ່ໄກ້ຄຽງເຂົ້າມາເຜີຍແຜ່ສາດສະຫນາຢູ່ບ້ານຂອນງອຍໂດຍບໍ່ໄດ້ຮັບອະນຸຍາດ ເຊິ່ງພະນັກງານໄດ້ປະຕິເສດວ່າການຈັບກຸມແມ່ນເກີດຂື້ນຍ້ອນເຫດການດັ່ງກ່າວ. ພວກເຂົາປະຕິເສດລາຍງານວ່າຊາວຄິດສຕຽນໄດ້ຖືກບັງຄັບໃຫ້ປ່ຽນສາດສະຫນາຢູ່ຫລວງນ້ຳທາໂດຍກ່າວວ່າບາງຄົນສະມັກໃຈຫຍຸດເຊື່ອຖືສາດສະຫນາຄິດສຕຽນເມື່ອມັນເປັນຕົ້ນເຫດໃຫ້ມີການຜິດຖຽງກັນພາຍໃນຄອບຄົວ. ເຈົ້າເມືອງເມືອງສິງປະຕິເສດວ່າບໍ່ມີຜູ້ໃດຖືກຈັບກຸມໃນປີ 2008. ໃນປີ 2008 ຍັງມີລາຍງານວ່າພະນັກງານທ້ອງຖິ່ນໄດ້ກົດດັນຫລາຍຄອບຄົວຢູ່ອັດຕະປື ເພື່ອໃຫ້ປະລະສາດສະຫນາຄິດສຕຽນ ເຖິງວ່າການຢ້ຽມຢາມຂອງພະນັກງານສູນກາງແນວລາວສ້າງຊາດແຂວງຈະລະບຸວ່າເປັນການແກ້ໄຂນັ້ນ ກໍ່ຕາມ. ມີລາຍງານຈາກພະນັກງານວ່າໄດ້ຄຸມຂັງຊາວຄິດສຕຽນສອງຄົນຢູ່ເມືອງສຳພັນ ແຂວງຜົ້ງສາລີ

ໃນຄວາມພະຍາຍາມທີ່ຈະບັງຄັບເຂົາໃຫ້ປະລະຄວາມເຊື່ອຖື. ຍັງມີຊາວຄິດສຕຽນຈຳນວນນຶ່ງຢູ່ເມືອງແອດ ແຂວງຫົວພັນກ່າວວ່າພວກເຂົາຖືກກົດດັນໃຫ້ປະລະຄວາມເຊື່ອຖືຂອງພວກເຂົາ.ໃນເດືອນພະຈິກ ປີ 2008 ໄດ້ມີລາຍງານວ່າມີເຈັດຄອບຄົວຢູ່ບ້ານນ້ຳແຮງ ແຂວງອຸດົມໄຊກໍ່ຖືກກົດດັນໃຫ້ປະລະຄວາມເຊື່ອຖືຂອງ ເຂົາເຈົ້າເຊັ່ນກັນ ເຊິ່ງຫົກຄອບຄົວທີ່ປະຕິເສດທີ່ຈະເຊັນເອກະສານການປະລະຄວາມເຊື່ອຖືນັ້ນ ກໍ່ມີ ລາຍງານວ່າມີຄຳສັ່ງໃຫ້ຍົກຍ້າຍອອກຈາກຫມູ່ບ້ານ. ອີງຕາມລາຍການກ່າວວ່າພວກເຂົາກໍພໍດີໄດ້ຍ້າຍໄປຢູ່ ອີກບ້ານນຶ່ງທີ່ເປັນຊຸມຊົນຊາວຄິດສຕຽນ. ຫລັງຈາກຕອນທ້າຍຂອງການເຮັດລາຍງານສະບັບນີ້ກໍບໍ່ມີ ຂ່າວຄາວຄືບຫນ້າຫຍັງເລີຍ ແລະ ພະນັກງານແຂວງອຸດົມໄຊກໍບໍ່ໄດ້ຮັບຮູ້ເຖິງເຫດການນີ້ເລີຍ. ບໍ່ໄດ້ມີລາຍງານກ່ຽວກັບການຂັບໄລ່ຄອບຄົວຊາວໂພເຕັກສຕັນທີ່ໄດ້ປະເຊີນຫນ້າກັບການໃຫ້ອອກຈາກຫມູ່ ບ້ານໃນຕົ້ນປີ 2007 ເນື່ອງຈາກພວກເຂົາບໍ່ຍອມປະລະຄວາມເຊື່ອຖືນັ້ນ.

ບໍ່ໄດ້ມີຄວາມຄືບຫນ້າໃນສີ່ກໍລະນີການຈັບກຸມ ແລະ ຄຸມຂັງຊາວໂພເຕັກສຕັນ 18 ຄົນໃນໄລຍະຈັດອັນດັບ ໃນລາຍງານຈາກ 3 ອາທິດ ຫາ ຫົກເດືອນ ຫລື ຫລາຍກວ່າໄລຍະນີ້.ນັກບວດສາມຄົນທີ່ຖືກພິຈາລະນາວ່າ ເປັນຜູ້ນຳກຸ່ມຊາວໂພເຕັກສຕັນເຜົ່າຂະມຸທີ່ຖືກຈັບຢູ່ ບ້ານຄອນແຄນ ໃນເດືອນ ພະຈິກ ປີ 2006 ເຊິ່ງຖືກ ຕັດອິດສະຫລະພາບ ປະມານນຶ່ງປີ ກ່ອນທີ່ເຂົາຈະຖືກປ່ອຍໂຕໃນຊ່ວງທ້າຍປີ 2007.

**ການບັງຄັບໃຫ້ປ່ຽນສາດສະໜາ**

ໃນໄລຍະການເຮັດລາຍງານ ມີພະນັກງານຢູ່ບາງຂົງເຂດໄດ້ພະຍາຍາມບັງຄັບຊາວໂພເຕັກສຕັນເພື່ອໃຫ້ ປະລະຄວາມເຊື່ອຖືເຂົາເຈົ້າ ເຖິງຢ່າງໃດກໍ່ຕາມບໍ່ໄດ້ມີລາຍງານວ່າການບັງຄັບໃຫ້ປ່ຽນສາດສະຫນານີ້ ປະສົບຜົນ ເຊິ່ງລວມທັງພົນລະເມືອງຊາວອາເມຣິກາກຸ່ມນ້ອຍໆທີ່ຖືກລໍ້ລວງ ຫລື ໜີອອກໄປຈາກ ສະຫະລັດຢ່າງຜິດກົດໝາຍ ຫລືຜູ້ທີ່ບໍ່ໄດ້ຮັບອະນຸຍາດໃຫ້ກັບຄືນປະເທດສະຫະລັດ.

ຢູ່ບ້ານສັນຍາ ແຂວງຫລວງນ້ຳທ່າ ເຊິ່ງເປັນບ່ອນທີ່ມີຄອບຄົວຊາວຄິດສຕຽນ 45 ຄອບຄົວ (ຫລາຍກວ່າ 200 ຄົນ) ເຊິ່ງສ່ວນໃຫຍ່ແມ່ນ ຍ້າວ, ຂະມຸ ແລະ ມົ້ງນັ້ນ ມີລາຍງານວ່າໃນສອງປີຜ່ານມາໄດ້ມີຫລາຍກວ່າ 10 ຄອບຄົວໄດ້ປ່ຽນສາດສະຫນາທີ່ເຂົານັບຖື ຍ້ອນຄວາມກົດດັນຈາກເຈົ້າຫນ້າທີ່ຕຳຫລວດ.

**ຄວາມຄືບຫນ້າ ແລະ ການພັດທະນາໃນທາງບວກໃນດ້ານການນັບຖືເສລີພາບທາງສາດສະໜາ**

ລາຍງານການນັບຖືເສລີພາບທາງດ້ານສາດສະຫນາຂອງລັດຖະບານໂດຍສະເພາະຕໍ່ຊາວ ໂພເຕັສຕັນ ກຸ່ມນ້ອຍນັ້ນຍັງຄົງມີການຂາດຕົກບົກຜ່ອງຍ້ອນບັນຫາຕ່າງໆຢູ່ໃນຂັ້ນທ້ອງຖິ່ນດ້ວຍການບຽດບຽນກັນ ຍ້ອນການເຊື່ອຖືສາດສະຫນາທີ່ແຕກຕ່າງກັນທີ່ເກີດຂື້ນຫລາຍໆຄັ້ງຢູ່ຫລາຍໆແຂວງ. ຢ່າງໃດກໍ່ຕາມໄດ້ມີ ການປະຕິບັດບາງບາດກ້າວໃນທາງບວກທີ່ເຈາະຈົງເຂົ້າໃນເລື່ອງເສລີພາບທາງສາດສະໜາ.

ໃນການປະກາດຢ່າງເປັນທາງການຂອງລັດຖະບານໃນຊຸມປີປະຈຸບັນເພື່ອໃຫ້ມີການປອງດອງ ແລະ ມີຄວາມເທົ່າທຽມກັນໃນການເຊື່ອຖືສາດສະຫນາ. ສູນກາງແນວລາວສ້າງຊາດກໍ່ຍັງສືບຕໍ່ແນະນໍາ ເຈົ້າ ຫນ້າທີ່ທ້ອງຖິ່ນໃຫ້ມີການປະນີປະນອມ ແລະ ກໍເຂົ້າແຊກແຊງໃນກໍລະນີທີ່ມີກຸ່ມສາດສະຫນາກຸ່ມນ້ອຍຖືກບຽດບຽນ ແລະ ຖືກປະຕິບັດໂດຍບໍ່ຖືກຕ້ອງ ໂດຍສະເພາະແມ່ນກຸ່ມຊາວຄຣິດສຕຽນ.

ບາງສະຖານທີ່ໆມີລາຍງານວ່າມີການລະເມີດສິດໃນໄລຍະສາມປີຜ່ານມາກໍ່ມີຄວາມຄືບຫນ້າທີ່ດີຂຶ້ນ. ສະຖານະການຢູ່ບ້ານສັນຍາ ແຂວງຫລວງນໍ້າທາກໍມີສະເຖຍລະພາບນັບຕັ້ງແຕ່ປີ 2007 ເມື່ອມີພະນັກງານຂັ້ນສູນກາງຈາກ ສູນກາງແນວລາວຮັກຊາດລົງຊ່ວຍແກ້ໄຂສະຖານະການດ້ວຍການໄປຢ້ຽມຢາມແຂວງຫລວງນໍ້າທາ ແລະ ການອອກເອກກະສານສະຫນັບສະຫນູນສິດໃນການປະກອບພິທີທາງສາດສະຫນາຊາວຄິດສຕຽນຢູ່ບ້ານສັນຍາ. ເຖິງວ່າຈະມີຢ່າງຫນ້ອຍສິບຄອບຄົວທີ່ປະລະຄວາມເຊື່ອຖືໃນສອງປີຜ່ານມາມີລາຍງານວ່າ ສະຖານະການທົ່ວໄປແມ່ນມີຄວາມຄືບຫນ້າໃນທາງທີ່ດີ ໃນຕອນທ້າຍຂອງການເຮັດລາຍງານນີ້. ເພາະການໄປຢ້ຽມຢາມຂອງພະນັກງານສູນກາງແນວລາວສ້າງຊາດ ຈຶ່ງມີລາຍງານວ່າສຸດທ້າຍໄດ້ມີການອະນຸຍາດໃຫ້ຊາວຄິດສຕຽນປະຕິບັດສາດສະຫນາຮ່ວມກັນເປັນກຸ່ມນ້ອຍໆ.

ໃນເດືອນພຶດສະພາ ປີ 2007 ທົ່ວຫນ້າກົມວຽກງານດ້ານສາດສະຫນາຂອງສູນກາງແນວລາວຮັກຊາດໄດ້ຈັດກອງປະຊຸມສໍາມະນາທົ່ວປະເທດ ໂດຍມີຜູ້ເຂົ້າຮ່ວມ 95 ຕົວແທນຈາກສີ່ສາດສະຫນາຂັ້ນແຂວງ ແລະກໍາແພງນະຄອນ ທັງຫມົດທີ່ໄດ້ຮັບອະນຸຍາດເພື່ອຕີລາຄາຄືສິດທິດ້ານສາດສະຫນາພາຍໃຕ້ລັດທະທໍາມະນູນ ແລະ ກົດຫມາຍ ແລະ ປຶກສາຫາລືກ່ຽວກັບການແກ້ໄຂບັນຫາກ່ຽວກັບສາດສະຫນາ ແລະບັນຫາຊົນເຜົ່າຕ່າງໆ.

ໃນເດືອນກໍລະກົດປີ 2007 ສູນກາງແນວລາວຮັກຊາດໄດ້ຈັດກອງປະຊຸມເທື່ອທີສອງສໍາລັບຜູ້ນໍາສາດສະຫນາ, ພະນັກງານ ຈາກກໍາແພງນະຄອນ ແລະ ແຂວງວຽງຈັນ ເຊິ່ງລວມທັງພະນັກງານຂັ້ນເມືອງແລະ ຂັ້ນບ້ານ. ຜູ້ເຂົ້າຮວ່ມກອງປະຊຸມນັ້ນຈະໄດ້ນໍາບົດຮຽນທີ່ໄດ້ຮັບກັບຄືນໄປໃຊ້ຢູ່ໃນທ້ອງຖິ່ນໃຜມັນ. ພະນັກງານຈາກສູນກາງແນວລາວສ້າງຊາດຍັງໄດ້ເດີນທາງຮ່ວມກັບຕົວແທນຂັ້ນແຂວງໄປຫລາຍໆແຂວງເພື່ອສົ່ງເສີມສະຫນັບສະຫນູນຄວາມເຂົ້າໃຈລະຫວ່າງ LEC ແລະ ພະນັກງານທ້ອງຖິ່ນໃນໄລຍະການເຮັດລາຍງານນີ້. ບັນດາທົ່ວຫນ້າອົງກອນທີ່ບໍ່ຂຶ້ນກັບລັດທະບານໄດ້ສະຫນັບສະຫນູນກອງປະຊຸມໄທຍ່ນານາຊາດສອງຄັ້ງໃນຫົວຂໍ້ “ສາດສະຫນາ ແລະ ກົດຫມາຍ” ທີ່ວຽງຈັນໃນເດືອນ ຕຸລາ ປີ 2008 ແລະເຮັດໃຫ້ລັດທະບານຮັບເປັນເຈົ້າພາບກອງປະຊຸມດັ່ງກ່າວຊໍ້າອີກ ໃນຊ່ວງທ້າຍປີ 2009 ຫລື ຕົ້ນປີ 2010. ໃນເດືອນມິຖຸນາ ປີ 2008 ພະນັກງານອະວຸໂສ ແລະ ພະນັກງານ ສູນກາງແນວລາວສ້າງຊາດໄດ້ເຂົ້າຮ່ວມກອງປະຊຸມອົງກອນທີ່ບໍ່ຂຶ້ນກັບລັດທະບານຄັ້ງທີ່ສອງ ທີ່ ກຸງປັກກິ່ງ ເພື່ອພິຈາລະນາບັນຫາຕົ້ນຕໍທີ່ກ່ຽວກັບເສລີພາບດ້ານສາດສະຫນາ. ພະນັກງານລັດທະບານໄດ້ເຂົ້າຮ່ວມກອງປະຊຸມໃນຫົວຂໍ້ດັ່ງກ່າວຄັ້ງທໍາອິດ

ໃນປີ 2007 ທີ່ຫວຽດນາມ. ໂບດຄາໂທລິກໄດ້ລາຍງານເຖິງຄວາມຄືບໜ້າຫລາຍຢ່າງນັບແຕ່ໄລຍະການເຮັດລາຍງານສະບັບປີຜ່ານມາ. ການອຸປະສົມບົດຂອງຄຸນພໍ່ໂບດຄາໂທລິກ ໃນປີ 2009 ທີ່ແຂວງຄຳມ່ວນ ຍັງຄົງສະແດງເຖິງຄວາມຄືບໜ້າອັນສຳຄັນຖ້າທຽບໃສ່ການຈຳກັດທີ່ຜ່ານມາ. ໃນ ພິທີລ້າງບາບໃຫ້ຊາວຄາໂທລິກໃໝ່ 710 ຄົນຢູ່ແຂວງວຽງຈັນ ເດືອນກຸມພາປີ 2007 ທີ່ມີບາງຄົນໄດ້ລໍຖ້າພິທີມາເປັນເວລາ 15 ປີໃນການຂໍອະນຸຍາດໃຫ້ມີພິທີດັ່ງກ່າວ ເຊິ່ງກໍ່ແມ່ນບາດກ້າວທີ່ສຳຄັນຂອງໂບດຄາໂທລິກ. ລັດທະບານຍັງໄດ້ອະນຸຍາດໃຫ້ຄຸນພໍ່ທີ່ຫລວງພະບາງທີ່ມາຈາກວຽງຈັນນັ້ນໃຫ້ສາມາດໄປຢ້ຽມຢາມໃຫ້ຫລາຍຂຶ້ນເພື່ອໃຫ້ບໍລິການປະຕິບັດສາດສະໜາໃຫ້ແກ່ຊາວຄາໂທລິກທີ່ກະແຈກກະຈາຍຢູ່ທາງພາກເໜືອເຊັ່ນຫລວງພະບາງ, ໄຊຍະບູລີ, ບໍ່ແກ້ວ ແລະ ຫລວງນ້ຳທ່າແຕ່ວ່າການເດີນທາງຂອງເພິ່ນຍັງຄົງຖືກຈຳກັດ ແລະຍັງຄົງປະຕິເສດບໍ່ໃຫ້ເພິ່ນພັກອາໃສຢູ່ຫລວງພະບາງ. ຜູ້ນຳສາດສະໜາຄຣິດອ້າງວ່າໂດຍທົ່ວໄປແລ້ວເສລີພາບທາງສາດສະໜາແມ່ນມີຄວາມຄືບໜ້າ,ຢ່າລືມວ່າການບໍລິການວັນຄຣິດສະມາດແມ່ນບໍ່ໄດ້ຮັບອະນຸຍາດໃຫ້ປະຕິບັດຢູ່ກຳແພງນະຄອນມາຈົນເຖິງປີ 2006 ແລະ  ຄວາມຄືບໜ້າດັ່ງກວ່າຍັງກະຈາຍໄປຫລາຍແຂວງ. ໃນຊວງເດືອນ ທັນວາ ປີ 2008 ບັນດາ ຜູ້ສັງເກດການໄດ້ແລເຫັນເຖິງຄວາມສາມາດການເປັນຜູ້ນຳຂອງໂບດ LEC ໃນການປຸກລະດົມໃຫ້ມີການຝຶກອົບຮົມໃຫ້ແກ່ຜູ້ນຳສາດສະໜາ ແລະພະນັກງານຂັ້ນແຂວງທີ່ແຂວງອຸດົມໄຊ ແລະ ຫລວງພະບາງໂດຍການສະໜັບສະໜູນຈາກລັດທະບານທັງສອງແຂວງ. ການຝຶກອົບຮົມໄດ້ຈັດຂຶ້ນທີ່ແຂວງວຽງຈັນໃນຂັ້ນແຂວງ ແລະ ຂັ້ນເມືອງ ແລະ ຍັງໄດ້ເຂົ້າຮ່ວມກອງປະຊຸມຂັ້ນບ້ານ. ໃນຕອນທ້າຍຂອງການເຮັດລາຍງານສະບັບນີ້ ບັນດາຜູ້ສັງເກດການຍັງໄດ້ເຫັນຄວາມຄືບໜ້າຢູ່ແຂວງຜົ້ງສາລີ ເຊິ່ງຜູ້ເຫລື້ອມໃສໃນໂບດ LEC ສາມາດເດີນທາງໄປຮ່ວມການຝຶກອົບຮົມ ແລະ ພິທີລ້າງບາບທີ່ວຽງຈັນ. ສ່ວນຢູ່ຫລວງພະບາງນັ້ນ ມີລາຍງານວ່າມີຊາວຄິດສຕຽນປະມານ 10,000 ຄົນເຊິ່ງໂດຍທົ່ວໄປແລ້ວພວກເຂົາແມ່ນມີອິດສະຫລະໃນການປະຕິບັດສາດສະໜາຢູ່ສະຖານທີ່ 48 ແຫ່ງ ແລະ ຍັງມີ 10 ເມືອງໃນ 11 ເມືອງ ທີ່ບໍ່ມີບັນຫາໃນເລື້ອງສາດສະໜາໃນຊວງຕອນທ້າຍຂອງລາຍງານ.

ໂບດ LEC ຍັງຄົງສືບຕໍ່ປະແຜ່ນງານທີ່ຫ້າວຫັນໃນການໃຫ້ບໍລິການແກ່ປວງຊົນໃນໄລຍະເຮັດລາຍງານນີ້ໂດຍການໃຫ້ການຊ່ວຍເຫລືອພັດທະນາ ແລະ ຈັດຕັ້ງໂຄງການສະຫວັດດີການໃນຫລາຍໆພື້ນທີ່ໆເຄີຍມີຄວາມຄັດແຍງກັນດ້ານສາດສະໜາ. ໄປພ້ອມກັບການເຄື່ອນໄຫວຂອງສູນກາງແນວລາວຮັກຊາດນັ້ນ, ໂບດ LEC ຍັງຄົງສືບຕໍ່ປະຈັດຕັ້ງກອງປະຊຸມພົບປະລະຫວ່າງພະນັກງານລັດທະບານ ກັບຊາວໂພເຕັກສຕັນຢູ່ບາງບ້ານທີ່ເຄີຍມີຄວາມເຄັ່ງຕຶງດ້ານສາດສະໜາ. ບັນດາຜູ້ນຳອະວຸໂສ ຂອງໂບດ LEC ໄດ້ພົວພັນກັບຊຸມຊົນສາດສະໜານານາຊາດເພີ່ມຂຶ້ນເພາະໂບດ LEC ໄດ້ກາຍເປັນສະມະຊິກ  ສະພາໂບດໂລກ (the World Council of Churches) ໃນປີ 2008 ຢ່າງເຕັມຕົວ.

ຊາວບາຮາຍໄດ້ ເພີ້ມທະວີກິດຈະກຳການຝຶກອົບຮົມຢູ່ເມືອງປາກເຊ ແຂວງ ຈຳປາສັກ. ພວກເຂົາຍັງໄດ້ປະຕິບັດວຽກງານຮ່ວມກັບສູນກາງແນວລາວສຮັກຊາດຢູ່ເມືອງທ່າແຂກເພື່ອສ້າງຕັ້ງການເຊື່ອມໂຍມຜູ້ທີ່ເຫຼື້ອມໃສສັດທາບາຮາຍໃຫ້ຍັງຄົງດຳລົງຊີວິດຢູ່ໝູ່ບ້ານຂອງເຂົາທີ່ແຂວງຄຳມ່ວນ ເຊິ່ງເປັນບ່ອນທີ່ມີ ຜູ້

ເຫຼື້ອມໃສສັດທາຫລາຍກວ່າພັນຄົນ ຈາກສອງຮ້ອຍຄອບຄົວໃນເມື່ອກ່ອນ. ຊາວບາຮາຍຍັງໄດ້ມີຄວາມທ້າວທັນໃນການຊອກຫາສາຍພົວພັນເຊື່ອມໂຍມກັບຊາວບາຮາຍທີ່ແຂວງ ອຸດົມໄຊ, ຊຽງຂວາງ, ແລະ ຫລວງພະບາງ. ນອກຈາກນັ້ນການອະນຸຍາດໃຫ້ສ້າງສູນແຫ່ງໃຫມ່ຢູ່ແຂວງບໍລິຄໍາໄຊ ເຊີ່ງເປັນບ່ອນທີ່ບາຮາຍໄດ້ຜູ້ເຫລື້ອມໃສສັດທາກຸ່ມທໍາອິດທີ່ແມ່ນຊຸມຊົນຊາວມົ້ງ. ບາຮາຍບັງໄດ້ກຸ່ມຜູ້ເຫລື້ອມໃສສັດທາກຸ່ມທໍາອິດຢູ່ແຂວງສາລະວັນ.

ໃນຕົ້ນປີ 2009 ມີຜູ້ນໍາສາດສະຫນາບາຮາຍ ແລະ ຜູ້ສັດທາຮວ່ມກັບຄູ່ຮວ່ມງານຊາວ ກໍາປູເຈຍ, ວຽດຫນາມ ແລະ ໄທ ເຂົ້າຮ່ວມກອງປະຊຸມຢູ່ກໍາປູເຈຍ ເຊີ່ງເປັນກອງປະຊຸມບາຮາຍໃນຂົງເຂດພາກພື້ນ 1 ໃນ 40 ພາກພື້ນໃນທົ່ວໂລກໃນເວລານັ້ນ.

ໃນເດືອນພຶດສະພາ ປີ 2008 ສິ່ງປຸກສ້າງແຫ່ງຫນື່ງຢູ່ທາງພາກເຫນືອຂອງແຂວງວຽງຈັນ ເຊີ່ງເຄີຍເປັນຂອງລັດທະບານນັ້ນໄດ້ອະນຸຍາດໃຫ້ບາຮາຍໄດ້ນໍາໃຊ້ ແລະ ອອກເອກະສານສິດນໍາໃຊ້ໃຫ້ແກ່ບາຮາຍ. ການຮ້ອງຂໍສິດນໍາໃຊ້ນີ້ແມ່ນໄດ້ຮັບການສະຫນັບສະຫນູນຈາກ ສູນກາງແນວລາວຮັກຊາດ.

ບັນດາສະພາປົກຄອງ ແລະ ສະພາປົກຄອງ ລະດັບຊາດຂອງຊາວບາຮາຍ ໄດ້ຈັດບຸນ 19 ວັນ ຂອງເຂົາເຈົ້າຂື້ນເປັນປະຈໍາ ແລະ ສະເຫລີມສະຫລອງວັນບຸນສັກສິດຕ່າງໆທັງໝົດ. ສະພາປົກຄອງ ລະດັບຊາດຂອງຊາວບາຮາຍ ກໍ່ປະຊຸມກັນເປັນປະຈໍາ ແລະ ສາມາດສົ່ງຄະນະ ຜູ້ແທນໄປຍັງສູນກາງ ປົກຄອງຂອງສາດສະໜາ ບາຮາຍ ທີ່ເອີ້ນວ່າ ຢູນີເວີໄຊ ເຮົາສ ອອບ໌ ຈັດສຕິກຊ (Universal House of Justice) ຊຶ່ງຕັ້ງຢູ່ພູເຂົາ ຄາແມລ ໃນເມືອງໄຮຟາ ຢູ່ປະເທດ ອິດສະລາແອນ. ພະນັກງານສູນກາງແນວລາວຮັກຊາດຍັງໄດ້ໄປຢ້ຽມຢາມສູນບາຮາຍ ຢູ່ເມືອງໄຮຟາ.

**ພາກ 3. ສະຖານະຂອງສັງຄົມໃນການນັບຖືເສລີພາບທາງສາດສະຫນາ**

ປະຊາຄົມສາດສະໜາຕ່າງໆ ແມ່ນຢູ່ຮ່ວມກັນຢ່າງສັນຕິ ແລະ ມີໄມຕີຈິດຕໍ່ກັນ, ສັງຄົມ ໃຫ້ຄວາມສໍາຄັນແກ່ການມີສາຍພົວພັນແບບຖືກຕ້ອງປອງດອງ ແລະ ສາດສະໜາພຸດ ເຊິ່ງເປັນ ສາດສະໜາທີ່ມີອິດທິພົນກວ່າຫມູ່ນັ້ນໂດຍທົ່ວໄປແມ່ນໄດ້ຜ່ອນຜັນໃຫ້ແກ່ການປະຕິບັດສາດສະໜາ ອື່ນໆຢູ່. ວັດທະນະທໍາປະເພນີຂອງລາວແມ່ນປູກນິໃສໃຫ້ມີຄວາມເຄົາລົບນັບຖື ໃນຄວາມແຕກຕ່າງດ້ານຄວາມເຊື່ອຖື ທີ່ມີມາເປັນເວລາດົນນານ ແລະ ເປັນທີ່ຮູ້ຈັກກັນດີ. ຢ່າງໃດກໍ່ຕາມຄວາມເຄັ່ງຕຶງລະຫວ່າງສາດສະໜາກໍ່ເກີດຂື້ນຢູ່ພາຍໃນກຸ່ມຊົນເຜົ່າພື້ນເມືອງນ້ອຍໃນບາງຄັ້ງຄາວໂດຍສະເພາະແມ່ນສືບເນື່ອງມາຈາກການເຜີຍແຜ່ສາດສະໜາເພື່ອຫັນປ່ຽນຄວາມເຊື່ອຖື ຫລື ສືບເນື່ອງມາຈາກຄວາມຂັດແຍ່ງກັນກ່ຽວກັບສິດທິ ໃນການນໍາໃຊ້ຊັບພະຍາກອນຂອງໝູ່ບ້ານ. ໃນຄວາມພະຍາຍາມຂອງບາງກຸ່ມໃນການຕັ້ງໂບດ LEC ເປັນອິດສະຫລະ

ຫລື ຮ່ວມກັບສາຂາໂບດຈາກຕ່າງປະເທດນັ້ນກໍ່ເກີດໃຫ້ມີຄວາມເຄັ່ງຕຶງຢູ່ໃນບັນດາປະຊາ ຄົມໂປເຕັກສຕັນ ໄດ້ເຊັ່ນກັນ. ຍ້ອນ ການປະຕິບັດ ສາດສະໜາຂອງ ສະມາຊິກບາງຄົນຂອງກຸ່ມນັບຖືສາດສະ ໜານ້ອຍ ທີ່ບໍ່ຍອມປະກອບສ່ວນໃນພິທີທາງສາດສະໜາຂອງ ຊາວພຸດ ຫລື ພິທີຂອງພວກຖືຜີກໍ່ເກີດໃຫ້ມີ ຄວາມເຄັ່ງ ຕຶງເກີດຂື້ນໄດ້.

**ພາກ 4. ນະໂຍບາຍຂອງລັດຖະບານສະຫະລັດ**

ເສລີພາບທາງສາດໜາແມ່ນແຜ່ນງານອັນດັບຕົ້ນໆຂອງສະຖານທູດສະຫະລັດປະຈຳວຽງຈັນ. ເຈົ້າໜ້າທີ່ສະຖານທູດກໍ່ໄດ້ປຶກສາຫາຫລືກັບພະນັກງານລັດຖະບານລາວໃນຫລາຍໆລະດັບຈາກສູນກາງ, ແຂວງ, ເມືອງ ແລະ ທ້ອງຖິ່ນຢູ່ສະເໝີ.

ສະຖານທູດສະຫະລັດຍັງສືບຕໍ່ເຈລະຈາກັບກົມສາດສະໜາ ຂອງສູນກາງແນວລາວສ້າງຊາດ. ສະຖານທູດໄດ້ໃຫ້ຂໍ້ມູນແກ່ສູນກາງແນວລາວຮັກຊາດເຖິງກໍລະນີທີ່ມີການຈັບກຸມ ຫລື ເຫດການຕ່າງໆ ແລະ ສູນກາງແນວລາວຮັກຊາດກໍ່ໃຊ້ຂໍ້ມູນດັ່ງກ່າວເພື່ອເຂົ້າໄກ່ເກ່ຍກັບເຈົ້າໜ້າທີ່ ທອ້ງຖິ່ນ. ຄະນະຕົວແທນຂອງສະຖານ ທູດໄດ້ພົບປະສົນທະນາ ກັບບັນດາຜູ້ນຳສາດສະໜາທີ່ສຳ ຄັນໃນທົ່ວປະເທດໃນໄລຍະທີ່ເຮັດລາຍງານ ສະບັບນີ້. ເຖິງແມ່ນວ່າຈະມີສະພາບແວດລ້ອມທີ່ຖືກຈຳກັດຮັດແຄບໂດຍສື່ມວນຊົນທີ່ເປັນຂອງລັດຖະບານ ແລະ ຢູ່ໃຕ້ການ ຄວບຄຸມຂອງລັດຖະບານກໍຕາມແຕ່ບັນດາເຈົ້າໜ້າທີ່ສະຖານທູດໄດ້ປຸກລະດົມຢ່າງຕັ້ງໜ້າເພື່ອໃຫ້ມີເສລີພາບທາງສາດສະໜາ.

ສະຖານທູດສະຫະລັດໄດ້ຊຸກຍູ້ຢ່າງຕັ້ງໜ້າໃຫ້ມີການຢ້ຽມຢາມຂອງຜູ້ແທນໃນລະດັບສູງເພື່ອໃຫ້ເປັນຕົວຊ່ວຍທີ່ມີປະສິດທິພາບທີ່ສຸດເພື່ອຊຸກຍູ້ລັດຖະບານໃຫ້ມີການເຄົາລົບນັບຖື ເສລີພາບທາງ ສາດສະໜາຫລາຍຂື້ນ. ສະຖານທູດສະຫະລັດຍັງໄດ້ບັນຈຸຫົວຂໍ້ທີ່ກ່ຽວກັບເສລີພາບ ດ້ານສາດສະໜາຢູ່ໃນປະເທດລາວນັ້ນເຂົ້າໃນເວພໄຊ້ ຂອງສະຖານທູດ. ຜູ້ຊຳນານງານຈາກຫ້ອງການສາກົນເພື່ອເສລີພາບທາງສາດສະໜາໄດ້ມາຢ້ຽມຢາມລາວສອງຄັ້ງໃນໄລຍະເຮັດລາຍງານ ແລະ ຍັງໄດ້ປຸກລະດົມໃຫ້ມີເສລີພາບທາງສາດສະໜາໃຫ້ຫລາຍຂື້ນໂດຍໄດ້ ພົບປະກັບພະນັກງານລັດທະບານອາວຸໂສຈາກຂັ້ນສູນກາງ, ຂັ້ນແຂວງ ແລະຂັ້ນເມືອງ. ສະຖານທູດສະຫະລັດໄດ້ສະໜັບສະໜູນຫົວໜ້າອົງກອນອິດສະຫລະນານາຊາດ ຢ່າງແຮງກ້າ ແລະ ກໍປະສົບຜົນໃນການເຊື້ອເຊີນລັດທະບານເພື່ອໃຫ້ເປັນເຈົ້າພາບຈັດກອງປະຊຸມນານາຊາດໃນຫົວຂໍ້ “ສາດສະໜາ ແລະ ກົດລະບຽບກົດໝາຍ” ເຊິ່ງຈະຈັດຂື້ນທີ່ວຽງຈັນໃນຊວງທ້າຍປີ 2009 ຫລື ຕົ້ນປີ 2010.